# ຄູ່ມື ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຂອງອາຊຽນ

The ASEAN Secretariat
Jakarta

The Association of Southeast Asian Nations (ASEAN) was established on 8 August 1967. The Member States are Brunei Darussalam, Cambodia, Indonesia, Lao PDR, Malaysia, Myanmar, Philippines, Singapore, Thailand and Viet Nam.
The ASEAN Secretariat is based in Jakarta, Indonesia.

For inquiries, contact:
The ASEAN Secretariat
Community Relations Division (CRD)
70A Jalan Sisingamangaraja
Jakarta 12110, Indonesia
Phone: (62 21) 724-3372, 726-2991
Fax: (62 21) 739-8234, 724-3504
E-mail: public@asean.org

Catalogue-in-Publication Data

ASEAN Wide Self-Certification (AWSC) Guidebook in Laotian Language
Jakarta, ASEAN Secretariat, December 2021

USAID FROM THE AMERICAN PEOPLE

382.959
1. ASEAN – ATIGA – ROO
2. Trade – Rules of Origin – Export

ISBN 978-623-6945-69-8 (EPUB)

ISBN 978-623-6945-69-8 (EPUB)
9 786236 945698

ASEAN: A Community of Opportunities for All

*This translated version is published by the ASEAN Secretariat with support from USAID.*
*The original English version of this publication is under the copyrights of the Association of Southeast Asian Nations, ASEAN Secretariat, Jakarta.*

The text of this publication may be freely quoted or reprinted, provided proper acknowledgement is given and a copy containing the reprinted material is sent to the Community Relations Division (CRD) of the ASEAN Secretariat, Jakarta.

General information on ASEAN appears online at the ASEAN Website: www.asean.org

Copyright Association of Southeast Asian Nations (ASEAN) 2021.
All rights reserved.

# ສາລະບານ


ຄຳສັບຫຍໍ້ .................... 4

ພາກທີ : ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (AWSC) ໂດຍສັງເຂບ .......... 5

1. ພາກສະເໜີ .................... 5
2. ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (AWSC) .................... 7
   - 2.1. ປະຫວັດຄວາມເປັນມາຂອງການສ້າງຕັ້ງໂຄງການ AWSC .................... 7
   - 2.2. ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (AWSC) .................... 8
   - 2.3. ສິດ ແລະ ຜົນປະໂຫຍດຕ່າງໆຂອງ AWSC .................... 9
   - 2.4. ເງື່ອນໄຂທີ່ຕ້ອງການໃນການຈະເປັນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (CE) ພາຍໃຕ້ .................... 10
   - 2.5. ສິດ ແລະ ພັນທະຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ .. 13
3. ການຈັດຕັ້ງປະຕິບັດ AWSC .................... 15
   - 3.1. ການຈັດຕັ້ງປະຕິບັດ AWSC .................... 15
   - 3.2. ຂັ້ນຕອນການກວດພິສູດ .................... 16
   - 3.3. ຄວາມແຕກຕ່າງລະຫວ່າງ AWSC, ແບບພິມ ດີ ແບບອີເລັກໂຕຣນິກ (e-Form D) ແລະ ແບບພິມ ດີ ແບບເຈ້ຍສໍ (Form D) ຂອງ ATIGA .................... 18

ພາກທີ II: ຄຳຖາມທີ່ມັກຖາມເລື້ອຍໆ .................... 19

ພາກທີ III: ບັນດາອົງການທີ່ມີສິດອຳນາດ .................... 29

ພາກທີ IV: ເອກະສານຊ້ອນທ້າຍ .................... 30

ເອກະສານຊ້ອນທ້າຍ 1: ລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບໃໝ່ທີ່ມີຜົນບັງຄັບໃຊ້ໃນວັນທີ 20 ກັນຍາ 2020 (ເອກະສານຊ້ອນ ທ້າຍ 8 ຂອງ ) 30

ເອກະສານຊ້ອນທ້າຍ 2: ຮູບແບບຂອງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າຕົ້ນສະບັບ ແລະ ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງທີ່ແນະນຳ 30

# ຄຳສັບຫຍໍ້

| | |
|---|---|
| ASEAN Economic Community (AEC): | ປະຊາຄົມເສດຖະກິດອາຊຽນ |
| ASEAN Member States (AMS): | ບັນດາປະເທດສະມາຊິກອາຊຽນ |
| Association of Southeast Asia Nations (ASEAN): | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| ASEAN Secretariat (ASEC): | ກອງເລຂາອາຊຽນ |
| ASEAN Trade in Goods Agreement (ATIGA): | ສັນຍາການຄ້າດ້ານສິນຄ້າອາຊຽນ |
| ASEAN Wide Self-Certification (AWSC): | ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທົ່ວອາຊຽນ |
| Certified Exporter (CE): | ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ |
| Certificate of Origin (CO): | ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ |
| Most Favoured Nations (MFN): | ປະເທດທີ່ໄດ້ຮັບອະນຸເຄາະທີ່ສຸດ |
| Operational Certification Procedure (OCP): | ລະບຽບຂັ້ນຕອນການຈັດຕັ້ງປະຕິບັດກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າ |
| Origin Declaration (OD): | ແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ |
| Rules of Origin (ROO): | ລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າ |
| Strategic Action Plan (SAP): | ແຜນປະຕິບັດງານຍຸດທະສາດ |
| Self-Certification Pilot Project (SCPP): | ໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ |

# ພາກທີ I

## ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (AWSC) ໂດຍສັງເຂບ




## 1. ພາກສະເໜີ

ການສ້າງຕັ້ງປະຊາຄົມເສດຖະກິດອາຊຽນ (AEC) ໃນປີ 2015 ແມ່ນຂີດໝາຍສຳຄັນໃນວາລະການເຊື່ອມໂຍງເສດຖະກິດພາກພື້ນໃນອາຊຽນ, ຊຶ່ງໄດ້ໃຫ້ໂອກາດຕ່າງໆໃນຮູບແບບຕະຫຼາດຂະໜາດໃຫຍ່ທີ່ມີມູນຄ່າເຖິງ 2,6 ລ້ານລ້ານໂດລາສະຫະລັດ ແລະ ປະຊາກອນຫຼາຍກວ່າ 622 ລ້ານຄົນ.

ແຜນງານ AEC 2025, ທີ່ຜູ້ນຳອາຊຽນໄດ້ຮັບຮອງເອົາໃນ ກອງປະຊຸມສຸດຍອດອາຊຽນຄັ້ງທີ 27, ໃນວັນທີ 22 ພະຈິກ 2015 ທີ່ກົວລາລຳເປີ, ປະເທດມາເລເຊຍ, ໄດ້ໃຫ້ທິດຊີ້ນຳໃນວົງກວ້າງຜ່ານບັນດາມາດຕະການຍຸດທະສາດ ສຳລັບ ແຕ່ປີ 2016 ເຖິງ 2025. ແຜນງານ AEC 2025 ແມ່ນແນໃສ່ກ້າວໄປເຖິງການບັນລຸວິໄສທັດຂອງການມີ AEC ໃນປີ 2025 ທີ່ມີການເຊື່ອມໂຍງ ແລະ ສຳພັນກັນເປັນຢ່າງສູງ; ມີຄວາມສາມາດແຂ່ງຂັນ, ມີແນວຄິດປະດິດສ້າງ ແລະ ຄຶກຄື້ນ;

ພ້ອມດ້ວຍການເຊື່ອມໂຍງກັນ ແລະ ການຮ່ວມມືລະຫວ່າງຂະແໜງການທີ່ມີການຍົກລະດັບ ແລະ ຊຸມຊົນທີ່ມີຄວາມຍືດຍຸ່ນຫຼາຍຂຶ້ນ, ບໍ່ແບ່ງແຍກກັນ ແລະ ເນັ້ນໃສ່ຄົນ, ຖືເອົາຄົນເປັນໃຈກາງ, ເຊື່ອມໂຍງກັບເສດຖະກິດໂລກ.

ແຜນງານ AEC 2025 ກໍານົດບັນດາມາດຕະການຍຸດທະສາດ ພາຍໃຕ້ແຕ່ລະອົງປະກອບຂອງ ຫ້າຄຸນລັກສະນະຂອງ AEC ປີ 2025. ເພື່ອການດໍາເນີນການຈັດຕັ້ງປະຕິບັດແຜນງານດັ່ງກ່າວ, ຈຶ່ງໄດ້ມີການວາງແຜນຢ່າງລະອຽດ ແລະ ຈັດຕັ້ງປະຕິບັດບັນດາມາດຕະການຍຸດທະສາດເຫຼົ່ານີ້ ໂດຍຜ່ານບັນດາແຜນວຽກຂອງອົງການຈັດຕັ້ງໃນຫຼາກຫຼາຍຂະແໜງການໃນອາຊຽນ.

ການຈັດຕັ້ງປະຕິບັດບັນດາມາດຕະການຂອງແຜນງານ AEC 2015 ກ່ຽວກັບ ສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA) ແລະ ມາດຕະການອໍານວຍຄວາມສະດວກດ້ານການຄ້າ ໄດ້ປະກອບສ່ວນເຮັດໃຫ້ການຈະລາຈອນສິນຄ້າມີຄວາມເສລີຫຼາຍຂຶ້ນ. ໃນ AEC ປີ 2025, ອາຊຽນຈະສືບຕໍ່ຫຼຸດຜ່ອນ ຫຼື ລຶບລ້າງສິ່ງກີດຂວາງດ້ານລະບຽບການຕາມຊາຍແດນ ແລະ ໃນເຂດຊາຍແດນທີ່ກີດກັ້ນການຄ້າ ເພື່ອໃຫ້ບັນລຸໄດ້ການເຄື່ອນຍ້າຍສິນຄ້າພາຍໃນພາກພື້ນໃຫ້ມີຄວາມສາມາດແຂ່ງຂັນ, ມີປະສິດທິພາບ ແລະ ມີຄວາມສະດວກສະບາຍ.

ເພື່ອເປັນການຮັບຮູ້ວິໄສທັດ AEC ປີ 2025, ຍຸດທະສາດແຜນປະຕິບັດງານ (SAP) ປີ 2016-2025 ສໍາລັບການຄ້າດ້ານສິນຄ້າ ໄດ້ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ການເປັນຕະຫຼາດ ແລະ ຖານການຜະລິດດ່ຽວ ທີ່ຈະຕ້ອງຮັກສາການຈະລາຈອນສິນຄ້າເສລີເປັນເປົ້າໝາຍພື້ນຖານ. ອາຊຽນຈະແນໃສ່ບັນລຸໃຫ້ໄດ້ລະບອບການຄ້າທີ່ມີການເຊື່ອມໂຍງກັນຂຶ້ນຕື່ມ, ກໍາຈັດສິ່ງກີດຂວາງລະບົບການຄ້າລະດັບພາກພື້ນທີ່ຍັງມີຢູ່ ແລະ ສົ່ງເສີມລະບົບທີ່ອີງໃສ່ກົດລະບຽບເປັນຫຼັກ ເພື່ອເຮັດໃຫ້ບັນດາຫົວໜ່ວຍທຸລະກິດໄດ້ຮັບຜົນປະໂຫຍດສູງສຸດຈາກ ATIGA.

ໂຄງການ AWSC ແມ່ນຢູ່ພາຍໃຕ້ມາດຕະການຍຸດທະສາດວ່າດ້ວຍ ການຫັນເປັນງ່າຍດາຍ ແລະ ການສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດລະບຽບ ກ່ຽວກັບ ແຫຼ່ງກໍາເນີດສິນຄ້າ, ພ້ອມກັບວິທີການປະຕິບັດງານສະເພາະ 3.2.3 (ວ່າດ້ວຍການຮັບຮູ້ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຂອງອາຊຽນ).

# 2. ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (AWSC)

## 2.1. ປະຫວັດຄວາມເປັນມາຂອງການສ້າງຕັ້ງໂຄງການ AWSC

ຄວາມເປັນມາຂອງການລິເລີ່ມການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໄດ້ຖືກນຳສະເໜີເປັນຄັ້ງທຳອິດໃນກອງປະຊຸມສະພາບໍລິຫານຄັ້ງທີ 23 ໃນປີ 2009 ດ້ວຍການຮັບຮອງເອົາ "ແຜນວຽກໃນການປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ". ດັ່ງທີ່ຂໍ້ກຳນົດເອງກໍໄດ້ບົ່ງບອກແລ້ວວ່າ ຜູ້ສົ່ງອອກ, ຜູ້ຄ້າຂາຍ ແລະ ຜູ້ຜະລິດ ທີ່ພິສູດໃຫ້ເຫັນເຖິງຄວາມຮູ້ ແລະ ຄວາມສາມາດຂອງຕົນ ໃນການປະຕິບັດຕາມຂໍ້ກຳນົດ ກ່ຽວກັບ ແຫຼ່ງກຳເນີດສິນຄ້າຈະໄດ້ຮັບອະນຸມັດໃຫ້ຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໄດ້ ແທນການຍື່ນຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO) ແບບທີ່ເຄີຍປະຕິບັດກັນມາ ຊຶ່ງຈະຕ້ອງແມ່ນເຈົ້າໜ້າທີ່ເປັນຄົນອອກເທົ່ານັ້ນ. ຍ້ອນວ່າກົນໄກດັ່ງກ່າວຍັງບໍ່ເຄີຍຖືກຈັດຕັ້ງປະຕິບັດຢູ່ໃນອາຊຽນເທື່ອ ແລະ ເພື່ອເປັນການທົດລອງດຳເນີນງານພ້ອມກັບການສັງເກດການ ເພື່ອແນໃສ່ຮັບປະກັນໃຫ້ມີຄວາມສະດວກສະບາຍໃນລະດັບໃດໜຶ່ງ, ໂດຍສະເພາະແມ່ນ ການຄຸ້ມຄອງຄວາມສ່ຽງ ແລະ ຄວາມໝັ້ນໃຈໃນການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ, ບັນດາປະເທດສະມາຊິກອາຊຽນ (AMS) ຈຶ່ງໄດ້ຕົກລົງທີ່ຈະຈັດຕັ້ງປະຕິບັດສອງໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (SCPP).

ໂຄງການ SCPP ທີ 1 ແມ່ນໄດ້ລົງລາຍເຊັນໃນວັນທີ 30 ສິງຫາ 2010 ຊຶ່ງມີປະເທດບຣູໄນດາຣູສະລາມ, ມາເລເຊຍ ແລະ ສິງກະໂປ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນວັນທີ 1 ພະຈິກ 2011. ຕໍ່ມາ ໄດ້ມີອີກສາມປະເທດສະມາຊິກອາຊຽນ (AMS) ໄດ້ເຂົ້າຮ່ວມໂຄງການທົດລອງດັ່ງກ່າວຕື່ມຄື: ປະເທດໄທ (28 ຕຸລາ 2011), ກຳປູເຈຍ (7 ກໍລະກົດ 2015) ແລະ ມຽນມາ (1 ມິຖຸນາ 2016). ຮອດເດືອນກັນຍາ ປີ 2020, ມີ 505 ບໍລິສັດ ໄດ້ຈົດທະບຽນເປັນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (CE) ພາຍໃຕ້ໂຄງການນີ້. ໃນໂຄງການທົດລອງນີ້, ທັງຜູ້ຜະລິດ ແລະ ຜູ້ຄ້າຂາຍ ສາມາດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃສ່ໃນໃບແຈ້ງລາຄາໃນທຸກເອກະສານທາງດ້ານການຄ້າ. ໂຄງການດັ່ງກ່າວຍັງອະນຸຍາດໃຫ້ບຸກຄົນທີສາມສາມາດອອກໃບແຈ້ງລາຄາໄດ້ອີກດ້ວຍ.

ຫຼັງຈາກຜົນສຳເລັດຂອງໂຄງການ SCPP ທີ 1, ໂຄງການ SCPP ທີ 2 ໄດ້ຮັບການລົງລາຍເຊັນໂດຍອິນໂດເນເຊຍ, ສ ປປລາວ ແລະ ຟີລິບປິນ ໃນວັນທີ 29 ສິງຫາ 2012 ແລະ ໄດ້ຈັດຕັ້ງປະຕິບັດໃນວັນທີ 1 ມັງກອນ 2014, ຕາມມາດ້ວຍການເຂົ້າເປັນສະມາຊິກຂອງ ຫວຽດນາມ ແລະ ໄທ ໃນວັນທີ 19 ທັນວາ 2014 ແລະ 1 ພຶດສະພາ 2015 ຕາມລຳດັບ. ມາຮອດເດືອນກັນຍາ ປີ 2020, ມີຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຈຳນວນ 154 ລາຍໄດ້ເຂົ້າຮ່ວມໂຄງການນີ້. ບໍ່ຄືກັນກັບໂຄງການ ທີ 1, ໂຄງການທົດລອງທີ 2 ພຽງແຕ່ອະນຸຍາດໃຫ້ຜູ້ຜະລິດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ໃສ່ໃນໃບແຈ້ງລາຄາໃຫ້ມີຂໍ້ມູນທີ່ຕ້ອງການຫຼາຍຂຶ້ນເທົ່ານັ້ນ, ໃນຂະນະທີ່ໄດ້ຕັດການອອກໃບແຈ້ງລາຄາຂອງບຸກຄົນທີສາມອອກໄປ.

ເນື່ອງຈາກວ່າໂຄງການ SCPP ພຽງແຕ່ນຳໃຊ້ກັບບັນດາປະເທດສະມາຊິກອາຊຽນ ທີ່ເຂົ້າຮ່ວມທີ່ມີລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ທີ່ແຕກຕ່າງກັນເທົ່ານັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ສ້າງລະບົບຂອງພາກພື້ນ. ເພື່ອເຮັດແນວນັ້ນໄດ້, 10 ປະເທດສະມາຊິກອາຊຽນໄດ້ລົງລາຍເຊັນໃນອະນຸສັນຍາສະບັບທຳອິດເພື່ອດັດແກ້ ATIGA ໃນວັນທີ 22 ມັງກອນ 2019. ຕໍ່ຈາກນັ້ນມາ, ລະບຽບຂັ້ນຕອນການປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ໄດ້ຮັບການດັດແກ້ໃນເດືອນກັນຍາ ປີ 2019, ຊຶ່ງໄດ້ລວມເອົາບັນດາຂໍ້ກຳນົດໃນສອງໂຄງການ SCPP ດັ່ງກ່າວເຂົ້າກັນ. ອະນຸສັນຍາສະບັບທຳອິດ ໄດ້ຮັບການໃຫ້ສັດຕະຍາບັນຈາກທັງ ໝົດ 10 ປະເທດສະມາຊິກອາຊຽນ ແລະ ມີຜົນບັງຄັບໃຊ້ໃນວັນທີ 20 ກັນຍາ 2020. ການຈັດຕັ້ງປະຕິບັດ AWSC ໄດ້ເຮັດໃຫ້ທັງສອງໂຄງການ SCPP ສິ້ນສຸດລົງໃນເວລາຕໍ່ມາ. ໃນປັດຈຸບັນ CE ສາມາດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (OD) ໃຫ້ແກ່ບັນດາປະເທດສະມາຊິກອາຊຽນທັງໝົດໄດ້.

## 2.2. ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (AWSC)

AWSC ແມ່ນການລິເລີ່ມການອຳນວຍຄວາມສະດວກດ້ານການຄ້າ ຊຶ່ງຊ່ວຍໃຫ້ CE ທຸກລາຍໃນບັນດາປະເທດສະມາຊິກອາຊຽນ ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃຫ້ແກ່ການສົ່ງອອກຂອງຕົນ ເພື່ອໃຫ້ໄດ້ຮັບປະໂຫຍດຈາກສິດທິພິເສດທາງດ້ານອັດຕາພາສີພາຍໃຕ້ ATIGA. ແທນທີ່ຈະຍື່ນໃບຄຳຮ້ອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO) ແບບພິມ (Form D) ຕໍ່ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, CE ສາມາດອອກ OD ໃສ່ໃນໃບແຈ້ງລາຄາ ຫຼື ເອກະສານທາງດ້ານການຄ້າອື່ນໆໄດ້ ເຊັ່ນ: ໃບແຈ້ງລາຍລະອຽດໃບຮຽກເກັບເງິນ, ໃບສັ່ງສິ່ງສິນຄ້າ ຫຼື ໃບແຈ້ງລາຍການຫຸ້ມຫໍ່ສິນຄ້າ.[1]

[1] ສຳລັບລາຍລະອຽດເພີ່ມຕື່ມ, ກະລຸນາເບິ່ງກົດລະບຽບຂໍ້ 12B (2) ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ .

## 2.3. ສິດ ແລະ ຜົນປະໂຫຍດຕ່າງໆຂອງ AWSC

ທັງພາກລັດ ແລະ ພາກເອກະຊົນ ຈະໄດ້ຮັບສິດ ແລະ ຜົນປະໂຫຍດຕ່າງໆຈາກ AWSC ຫຼາຍຂຶ້ນ. ໃນແງ່ຂອງການນຳໃຊ້ຜົນປະໂຫຍດພາຍໃຕ້ ATIGA, AWSC ຊຸກຍູ້ໃຫ້ຜູ້ຄ້າຂາຍທີ່ບໍ່ມີຄວາມຕ້ອງການທີ່ຈະຂໍ CO ເປັນເອກະສານ ໃຫ້ແກ່ຜະລິດຕະພັນທີ່ໄດ້ຮັບອັດຕາພາສີປະເທດທີ່ໄດ້ຮັບອະນຸເຄາະທີ່ສຸດ (MFN), ຊຶ່ງອາດຈະເຮັດໃຫ້ກຳໄລຂັ້ນຕົ້ນຕ່ຳ ເນື່ອງຈາກຜົນປະໂຫຍດທີ່ໄດ້ຮັບຈາກສິດທິພິເສດທາງດ້ານອັດຕາພາສີ ບໍ່ໄດ້ຄອບຄຸມຄ່າໃຊ້ຈ່າຍທາງບໍລິຫານໃນການຍື່ນຄຳຮ້ອງ. ໂຄງການດັ່ງກ່າວຍັງເຮັດໃຫ້ຫຼຸດຄວາມຊັບຊ້ອນໃນການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາ ATIGA ລົງຫຼາຍ ຊຶ່ງເປັນການອຳນວຍຄວາມສະດວກ ແລະ ສົ່ງເສີມການຄ້າໃນທົ່ວພາກພື້ນຢ່າງຫຼວງຫຼາຍ.

ສຳລັບຜູ້ສົ່ງອອກແລ້ວ, AWSC ຍັງຊ່ວຍຫຼຸດຜ່ອນໜ້າວຽກ, ຄ່າໃຊ້ຈ່າຍບໍລິຫານ ແລະ ຄ່າໃຊ້ຈ່າຍໃນການເຮັດທຸລະກິດຂອງຕົນລົງ. CE ບໍ່ຈຳເປັນຕ້ອງໄດ້ກະກຽມ ແລະ ຍື່ນເອກະສານສະໜັບສະໜູນຕ່າງໆ ເພື່ອຂໍ CO ໃຫ້ແກ່ສິນຄ້າທີ່ລົງທະບຽນຂອງຕົນ. ຍິ່ງໄປກວ່ານັ້ນ, ພວກເຂົາບໍ່ຈຳເປັນຕ້ອງເຂົ້າໄປຫາສຳນັກງານຂອງເຈົ້າໜ້າທີ່ອອກໃບຢັ້ງຢືນເພື່ອຍື່ນ, ນຳເອກະສານ ແລະ ຮັບເອົາເອກະສານແບບພິມ ດີ (Form D) ຂອງຕົນ, ຊຶ່ງອາດເປັນການກີດກັ້ນຜູ້ທີ່ຢູ່ຫ່າງໄກຈາກສຳນັກງານຂອງເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ. ນອກຈາກຄ່າໃຊ້ຈ່າຍໃນການຍື່ນຄຳຮ້ອງທີ່ຫຼຸດລົງຢ່າງເຫັນໄດ້ຊັດເຈນແລ້ວ, AWSC ຍັງຊ່ວຍຫຼຸດຜ່ອນເວລາໃນຂະບວນການຂົນສົ່ງອີກດ້ວຍ, ທີ່ອາດຈະ ກ່ຽວຂ້ອງກັບຄ່າໃຊ້ຈ່າຍໃນການເກັບຮັກສາ, ຄ່າຈອດເກີນເວລາ ແລະ ຄ່າໃຊ້ຕູ້ສິນຄ້ານອກທ່າເຮືອ. ພ້ອມກັນນັ້ນ, ກໍຈະມີການຊຸກຍູ້ໃຫ້ CE ມີການຄ້າຂາຍຢ່າງມີປະສິດທິພາບຫຼາຍຂຶ້ນ, ໄດ້ກຳໄລຫຼາຍຂຶ້ນ ແລະ ສ້າງວຽກເຮັດງານທຳຫຼາຍຂຶ້ນ.

ນອກຈາກນັ້ນ, AWSC ຍັງຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍບໍລິຫານໃຫ້ແກ່ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າອີກດ້ວຍ ເພາະຜູ້ສົ່ງອອກທີ່ບັນລຸໄດ້ຕາມສະຖານະພາບຂອງ CE ແມ່ນສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໄດ້.

**ຮູບທີ 1 ສະຫຼຸບສິດ ແລະ ຜົນປະໂຫຍດຕ່າງໆຂອງ AWSC**




## 2.4. ເງື່ອນໄຂທີ່ຕ້ອງການໃນການຈະເປັນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (CE) ພາຍໃຕ້ AWSC

ຕາມທີ່ກຳນົດໄວ້ໃນກົດລະບຽບຂໍ້ 1 ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA, CE ໝາຍເຖິງ ຜູ້ສົ່ງອອກທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງເພື່ອອອກ OD ໃຫ້ແກ່ແຫຼ່ງກຳເນີດຂອງສິນຄ້າສົ່ງອອກ.

ຕາມທີ່ກຳນົດໄວ້ໃນກົດລະບຽບຂໍ້ 12A (1) ຜູ້ສົ່ງອອກຕ້ອງປະກອບຄຳຮ້ອງເປັນລາຍລັກອັກສອນ ຫຼື ເປັນທາງອີເລັກໂຕຣນິກ ແລະ ຍື່ນໃຫ້ເຈົ້າໜ້າທີ່ທີ່ມີສິດໃຫ້ໄດ້ຕາມເງື່ອນໄຂທີ່ຈຳ

ເປັນທັງໝົດ ເພື່ອພິສູດສະຖານະແຫຼ່ງກຳເນີດຂອງສິນຄ້າ ທີ່ໄດ້ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແລ້ວ. ເຈົ້າໜ້າທີ່ທີ່ມີສິດອາດຈະໃຫ້ສະຖານະ CE ພາຍໃຕ້ເງື່ອນໄຂຕ່າງໆທີ່ພວກເຂົາເຫັນວ່າເໝາະສົມ, ລວມທັງໃນກໍລະນີໃດໜຶ່ງ ຕໍ່ໄປນີ້:

(a) ຜູ້ສົ່ງອອກໄດ້ຈົດທະບຽນຖືກຕ້ອງຕາມກົດໝາຍ ແລະ ປະຕິບັດຕາມລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ;

(b) ຜູ້ສົ່ງອອກຕ້ອງຮັບຜິດຊອບໃນການຮັບປະກັນວ່າ ຜູ້ມີສິດອຳນາດລົງລາຍເຊັນທີ່ຮັບຜິດຊອບໃນການອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າມີຄວາມຮັບຮູ້ ແລະ ເຂົ້າໃຈເຖິງລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ;

(c) ຜູ້ສົ່ງອອກຈະຕ້ອງມີປະສົບການໃນການສົ່ງອອກຢູ່ໃນລະດັບທີ່ໜ້າພໍໃຈ ໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ;

(d) ຜູ້ສົ່ງອອກບໍ່ມີປະຫວັດໃນການສໍ້ໂກງລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າໃດໆ ໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ;

(e) ຜູ້ສົ່ງອອກຕ້ອງມີການປະຕິບັດຕາມກົດລະບຽບທີ່ດີ ຊຶ່ງວັດໄດ້ຈາກການບໍລິຫານຄວາມສ່ຽງຂອງເຈົ້າໜ້າທີ່ທີ່ມີສິດອຳນາດຂອງປະເທດສະມາຊິກທີ່ສົ່ງອອກ;

(f) ໃນກໍລະນີເປັນຜູ້ຄ້າຂາຍ, ຜູ້ສົ່ງອອກຕ້ອງມີ ການຮັບຮອງຈາກຜູ້ຜະລິດ ທີ່ລະບຸໃຫ້ເຫັນເຖິງແຫຼ່ງກຳເນີດຂອງຜະລິດຕະພັນທີ່ຈະຕ້ອງມີການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ແລະ ຄວາມພ້ອມຂອງຜູ້ຜະລິດ ທີ່ຈະໃຫ້ຄວາມຮ່ວມມືໃນການກວດກາຢ້ອນຫຼັງ ແລະ ການເຂົ້າໄປກວດພິສູດ ຖ້າຕ້ອງການ;

(g) ຜູ້ສົ່ງອອກຕ້ອງມີລະບົບການບັນທຶກ ແລະ ການຕິດຕາມຂໍ້ມູນທີ່ດີ, ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ.

ນອກຈາກບັນດາເງື່ອນໄຂທີ່ໄດ້ກ່າວມານັ້ນແລ້ວ, ຍັງມີຂໍ້ກຳນົດສະເພາະອື່ນໆ ທີ່ກຳນົດໂດຍແຕ່ລະປະເທດສະມາຊິກອາຊຽນ.

ເມື່ອການຍື່ນຄຳຮ້ອງສຳເລັດແລ້ວ, ເຈົ້າໜ້າທີ່ທີ່ມີສິດຈະອອກໃບອະນຸຍາດເປັນລາຍລັກອັກສອນໃຫ້ແກ່ , ລວມທັງລະຫັດການອະນຸຍາດ ຊຶ່ງຕ້ອງໄດ້ໃສ່ເຂົ້າໄປໃນການອອກ . ປະເທດສະ

ມາຊິກຈະຕ້ອງປ້ອນຂໍ້ມູນກ່ຽວກັບໃບອະນຸຍາດທີ່ໄດ້ອອກໃຫ້ດັ່ງກ່າວ ເຂົ້າໃສ່ໃນຖານຂໍ້ມູນຂອງ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ, ໂດຍປະຕິບັດຕາມກົດລະບຽບຂໍ້ 2(4).

**ຮູບທີ 2 ສະຫຼຸບເງື່ອນໄຂຕ່າງໆໃນການໃຫ້ສະຖານະ**

1
- ໄດ້ຂຶ້ນທະບຽນຢູ່ປະເທດສະມາຊິກທີ່ສົ່ງອອກ;

2
- ຮັບຮູ້ ແລະ ເຂົ້າໃຈລະບຽບ ກ່ຽວກັບ ແຫຼ່ງກຳເນີດສິນຄ້າໃນ ATIGA;

3
- ເປັນຜູ້ສົ່ງອອກທີ່ມີປະສົບການ;

4
- ບໍ່ມີປະຫວັດກ່ຽວກັບການສໍ້ໂກງລະບຽບແຫຼ່ງກຳເນີດສິນຄ້າໃດໆ;

5
- ມີການປະຕິບັດຕາມກົດລະບຽບທີ່ດີ ຊຶ່ງວັດໄດ້ຈາກກົດວ່າດ້ວຍການບໍລິຫານຄວາມສ່ຽງ;

6
- ຜູ້ຄ້າຂາຍຕ້ອງມີ ການຮັບຮອງຈາກຜູ້ຜະລິດ ແລະ ພ້ອມທີ່ຈະຮ່ວມມືໃນການກວດກາຢ້ອນ ຫຼັງ ແລະ ການເຂົ້າໄປກວດພິສູດ ແລະ

7
- ມີລະບົບການບັນທຶກ ແລະ ການຕິດຕາມຂໍ້ມູນທີ່ດີ.

## 2.5. ສິດ ແລະ ພັນທະຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

CE ສາມາດອອກ OD ໄດ້ ແລະ ເມື່ອເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າໄດ້ຮັບ OD ແລ້ວ, ສິນຄ້າທີ່ມີແຫຼ່ງກຳເນີດຕາມທີ່ໄດ້ຮອງຮັບໃນ OD ດັ່ງກ່າວ ແມ່ນມີສິດໄດ້ຮັບສິດທິພິເສດທາງດ້ານອັດຕາພາສີຂອງ

ຕາມທີ່ກຳນົດໄວ້ໃນກົດລະບຽບຂໍ້ 12A (4),  CE ຈະຕ້ອງມີພັນທະ ດັ່ງຕໍ່ໄປນີ້:

(a) ອະນຸຍາດໃຫ້ເຈົ້າໜ້າທີ່ທີ່ມີສິດເຂົ້າເຖິງຂໍ້ມູນ ແລະ ສະຖານທີ່ຕ່າງໆ ເພື່ອຈຸດປະສົງໃນການຕິດຕາມກວດກາການນຳໃຊ້ໃບອະນຸຍາດ ແລະ ການກວດສອບຄວາມຖືກຕ້ອງຂອງການແຈ້ງຮັບຮອງແຫຼ່ງກຳເນີດສິນຄ້າທີ່ໄດ້ອອກໃຫ້. ຈະຕ້ອງອະນຸຍາດໃຫ້ຂໍ້ມູນ ແລະ ການບັນຊີໃຫ້ແກ່ການກຳນົດ ແລະ ການກວດພິສູດສະຖານະແຫຼ່ງກຳເນີດຂອງສິນຄ້າທີ່ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃຫ້ ໃນເວລາຢ່າງໜ້ອຍສາມ (3) ປີ ນັບຈາກມື້ອອກໃບແຈ້ງລາຍລະອຽດດັ່ງກ່າວ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ; [2]

(b) ອອກໄດ້ພຽງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃຫ້ແກ່ສິນຄ້າທີ່ CE ໄດ້ຮັບອະນຸຍາດໃຫ້ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ແລະ ໃຫ້ແກ່ສິນຄ້າທີ່ CE ມີທຸກເອກະສານທີ່ເໝາະສົມ ເພື່ອພິສູດສະຖານະແຫຼ່ງກຳເນີດຂອງສິນຄ້າທີ່ກ່ຽວຂ້ອງ ໃນເວລາອອກໃບແຈ້ງລາຍລະອຽດດັ່ງກ່າວ;

(c) ສືບຕໍ່ປະຕິບັດຕາມບັນດາເງື່ອນໄຂທີ່ໄດ້ກຳນົດໄວ້ໃນວັກ 2 ຂອງກົດລະບຽບຂໍ້ 12 ວ່າດ້ວຍ (ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ) ຂອງ OCP;

(d) ໃຫ້ຄວາມຮ່ວມມືໃນການກວດກາຢ້ອນຫຼັງ ແລະ ການເຂົ້າໄປກວດພິສູດ;

(e) ຍອມຮັບຄວາມຮັບຜິດຊອບທັງໝົດ  ຕໍ່ການອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທຸກຢ່າງ, ລວມທັງການນຳໃຊ້ໄປໃນທາງທີ່ບໍ່ຖືກຕ້ອງ ແລະ

(f) ແຈ້ງໃຫ້ເຈົ້າໜ້າທີ່ທີ່ມີສິດຊາບທັນທີ ກ່ຽວກັບ ການປ່ຽນແປງໃດໜຶ່ງທີ່ກ່ຽວຂ້ອງກັບຂໍ້ມູນທີ່ໄດ້ຍື່ນໄປແລ້ວ ພາຍໃຕ້ກົດລະບຽບຂໍ້ 2(4) ຂອງເອກະສານຊ້ອນທ້າຍນີ້.

[2] ສຳລັບລາຍລະອຽດເພີ່ມຕື່ມກ່ຽວກັບ ຂໍ້ກຳນົດໃນການຈົດບັນທຶກ, ກະລຸນາເບິ່ງກົດລະບຽບຂໍ້ 17 ຂອງລະບຽບຂັ້ນຕອນການຈັດຕັ້ງປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງສັນຍາ ATIGA.

ໂດຍເນັ້ນໜັກຕື່ມອີກວ່າ ແຕ່ລະປະເທດສະມາຊິກອາຊຽນ ອາດຈະຮຽກຮ້ອງໃຫ້ມີພັນທະທີ່ແຕກຕ່າງກັນ ຫຼື ຫຼາຍກວ່ານັ້ນ ສຳລັບ CE.

### ຮູບທີ 3 ສະຫຼຸບບັນດາພັນທະຂອງ CE

**A**
- ອະນຸຍາດໃຫ້ເຈົ້າໜ້າທີ່ທີ່ມີສິດເຂົ້າເຖິງຂໍ້ມູນ (ບໍ່ເກີນ 3 ປີ) ແລະ ສະຖານທີ່ຕ່າງໆ ເພື່ອຈຸດປະສົງໃນການຕິດຕາມກວດກາການນຳໃຊ້ໃບອະນຸຍາດ ແລະ ການກວດສອບຄວາມຖືກຕ້ອງຂອງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທີ່ໄດ້ອອກມາ;

**B**
- ອອກໄດ້ພຽງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃຫ້ແກ່ສິນຄ້າທີ່ ໄດ້ຮັບອະນຸຍາດໃຫ້ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າເທົ່ານັ້ນ;

**C**
- ສືບຕໍ່ປະຕິບັດຕາມບັນດາເງື່ອນໄຂທີ່ໄດ້ກຳນົດໄວ້ໃນວັກ 2 ຂອງກົດລະບຽບຂໍ້ 12 ວ່າດ້ວຍ (ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ) ຂອງ OCP;

**D**
- ໃຫ້ຄວາມຮ່ວມມືໃນການກວດກາຍ້ອນຫຼັງ ແລະ ການເຂົ້າໄປກວດພິສູດ;

**E**
- ຍອມຮັບຄວາມຮັບຜິດຊອບທັງໝົດ ຕໍ່ທຸກການອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທີ່ໄດ້ອອກມາ, ລວມທັງການນຳໃຊ້ໄປໃນທາງທີ່ບໍ່ຖືກຕ້ອງ;

**F**
- ແຈ້ງໃຫ້ເຈົ້າໜ້າທີ່ທີ່ມີສິດຊາບທັນທີ ກ່ຽວກັບ ການປ່ຽນແປງໃດໜຶ່ງທີ່ກ່ຽວຂ້ອງກັບຂໍ້ມູນທີ່ໄດ້ຍື່ນໄປແລ້ວ.

# 3. ການຈັດຕັ້ງປະຕິບັດ AWSC

## 3.1. ການຈັດຕັ້ງປະຕິບັດ AWSC

ການຈັດຕັ້ງປະຕິບັດ AWSC ແມ່ນສະຫຼຸບຫຍໍ້ໄດ້ດັ່ງນີ້:

**ຂັ້ນຕອນທີ 1:** ຜູ້ສົ່ງອອກຕ້ອງໄດ້ຍື່ນຄໍາຮ້ອງສະຖານະ CE ຕາມກົດໝາຍ ແລະ ລະບຽບການຂອງ AMS. ເມື່ອຄໍາຮ້ອງໄດ້ຮັບການຍອມຮັບແລ້ວ, ຜູ້ສົ່ງອອກຈະໄດ້ຮັບການອະນຸຍາດໃຫ້ເປັນ CE. ຜູ້ສົ່ງອອກຕ້ອງໄດ້ຍື່ນຄໍາຮ້ອງສະຖານະ CE ຕາມກົດໝາຍ ແລະ ລະບຽບການຂອງ AMS. ເມື່ອຄໍາຮ້ອງໄດ້ຮັບການຍອມຮັບແລ້ວ, ຜູ້ສົ່ງອອກຈະໄດ້ຮັບການອະນຸຍາດໃຫ້ເປັນ CE.

**ຂັ້ນຕອນທີ 2:** ຫຼັງຈາກນັ້ນ AMS ຈະອັບໂຫຼດຂໍ້ມູນຂອງ CE ໃສ່ໃນຖານຂໍ້ມູນ CE ຂອງ AWSC.[3]

**ຂັ້ນຕອນທີ 3:** CE ອອກ OD ໃຫ້ແກ່ສິນຄ້າຂອງຕົນ ຖ້າສິນຄ້າດັ່ງກ່າວບັນລຸໄດ້ຕາມເງື່ອນໄຂຂອງ ROO ພາຍໃຕ້ ATIGA.[4]

**ຂັ້ນຕອນທີ 4:** CE ສົ່ງ OD ໃຫ້ຜູ້ນໍາເຂົ້າ.

**ຂັ້ນຕອນທີ 5:** ຜູ້ນໍາເຂົ້າຍື່ນ OD ໃຫ້ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກອາຊຽນທີ່ນໍາເຂົ້າ ເພື່ອໃຫ້ໄດ້ຮັບສິດທິພິເສດທາງດ້ານອັດຕາພາສີຂອງ ATIGA.

**ຂັ້ນຕອນທີ 6:** ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກອາຊຽນທີ່ນໍາເຂົ້າກວດພິສູດຄວາມຖືກຕ້ອງຂອງ OD ທີ່ຜູ້ນໍາເຂົ້າຍື່ນໃຫ້ ຜ່ານຖານຂໍ້ມູນ CE ແລະ ຄວາມຖືກຕ້ອງຂອງການແຈ້ງຮັບຮອງທີ່ຜູ້ສົ່ງອອກໄດ້ອອກໃຫ້.

**ຂັ້ນຕອນທີ 7:** ເຈົ້າໜ້າທີ່ພາສີອະນຸຍາດໃຫ້ປະຕິບັດສິດທິພິເສດທາງດ້ານອັດຕາພາສີຂອງ ATIGA ແກ່ສິນຄ້າທີ່ໄດ້ຮັບການຮັບຮອງໃນ OD ຖ້າ OD ດັ່ງກ່າວກົງກັບຂໍ້ມູນທີ່ຢູ່ໃນຖານຂໍ້ມູນ CE ຂອງ AWSC ແລະ ຖ້າບໍ່ມີການຍົກຂໍ້ຂ້ອງໃຈອື່ນໆກ່ຽວກັບໃບແຈ້ງລາຍລະອຽດດັ່ງກ່າວຂຶ້ນມາອີກ.

---

[3] ຖານຂໍ້ມູນ CE ແມ່ນເພື່ອຈຸດປະສົງໃນການນໍາໃຊ້ຂອງເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ທີ່ມີສິດ ໃນການກວດພິສູດ CE ແລະ ຈະບໍ່ເປີດເຜີຍໃຫ້ແກ່ສາທາລະນະ.

[4] ສໍາລັບຂໍ້ມູນສະເພາະເພີ່ມຕື່ມກ່ຽວກັບວິທີການອອກ OD, ກະລຸນາເບິ່ງກົດລະບຽບຂໍ້ 12B ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າຂອງ ATIGA.

ແຜນວາດຂ້າງລຸ່ມນີ້ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດ AWSC:

**ຮູບທີ 4 ສະຫຼຸບການຈັດຕັ້ງປະຕິບັດ AWSC**




## 3.2. ຂັ້ນຕອນການກວດພິສູດ

ປະເທດສະມາຊິກອາຊຽນທີ່ນຳເຂົ້າ ອາດຈະຮ້ອງຂໍໃຫ້ເຈົ້າໜ້າທີ່ທີ່ມີສິດອຳນາດຂອງປະເທດສະມາຊິກອາຊຽນທີ່ສົ່ງອອກດຳເນີນການກວດກາຢ້ອນຫຼັງແບບສຸ່ມ ແລະ/ຫຼື ເມື່ອມີຂໍ້ສົງໄສທີ່ສົມເຫດຜົນ ເພື່ອໃຫ້ກວດສອບຄວາມຖືກຕ້ອງຂອງເອກະສານ ຫຼື ຄວາມຖືກຕ້ອງຂອງຂໍ້ມູນກ່ຽວກັບແຫຼ່ງກຳເນີດຂອງສິນຄ້າທີ່ເປັນບັນຫາ ຫຼື ສ່ວນໃດໜຶ່ງຂອງສິນຄ້າດັ່ງກ່າວ.

ເມື່ອມີການຮ້ອງຂໍ, ເຈົ້າໜ້າທີ່ທີ່ມີສິດອຳນາດຂອງປະເທດສະມາຊິກອາຊຽນທີ່ສົ່ງອອກ ຈະດຳເນີນການກວດກາຢ້ອນຫຼັງກ່ຽວກັບໃບລາຍງານຕົ້ນທຶນຂອງຜູ້ຜະລິດ/ຜູ້ສົ່ງອອກ, ພາຍໃນເວລາຫົກ (6) ເດືອນນັບແຕ່ມື້ສົ່ງອອກ.

ໃນຂະນະລໍຖ້າຜົນການກວດສອບ, ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກອາຊຽນທີ່ນຳເຂົ້າ ອາດຈະໂຈະການອະນຸຍາດປະຕິບັດສິດທິພິເສດທາງດ້ານອັດຕາພາສີ. ເຖິງຢ່າງໃດກໍຕາມ, ເວັ້ນເສຍແຕ່ວ່າສິນຄ້າຈະຖືກຍຶດໄວ້ ຍ້ອນການເກືອດຫ້າມ/ການຈຳກັດການນຳເຂົ້າ ຫຼື

ມີຂໍ້ສົງໄສວ່າມີການລະເມີດ, ສິນຄ້າເຫຼົ່ານີ້ອາດຈະຖືກປ່ອຍໃຫ້ຜູ້ນຳເຂົ້າ ຕາມກົດໝາຍ ແລະ ກົດລະບຽບພາຍໃນປະເທດ ແລະ ມາດຕະການທາງບໍລິຫານອື່ນໆທີ່ເຫັນວ່າມີຄວາມຈຳເປັນ.

ໃນກໍລະນີພິເສດ ຖ້າປະເທດສະມາຊິກອາຊຽນທີ່ນຳເຂົ້າບໍ່ພໍໃຈກັບຜົນຂອງການກວດກາຢ້ອນຫຼັງ, ປະເທດດັ່ງກ່າວອາດຈະຮຽກຮ້ອງການເຂົ້າໄປກວດພິສູດກັບ ປະເທດສະມາຊິກອາຊຽນທີ່ສົ່ງອອກ.

ກ່ອນທີ່ຈະດຳເນີນການເຂົ້າໄປກວດພິສູດ, ປະເທດສະມາຊິກອາຊຽນທີ່ນຳເຂົ້າ ຈະຕ້ອງແຈ້ງເຈດຈຳນົງຂອງຕົນເປັນລາຍລັກອັກສອນໃຫ້ແກ່ຜູ້ສົ່ງອອກ/ຜູ້ຜະລິດ, ຜູ້ນຳເຂົ້າ ແລະ ບັນດາອົງການທີ່ກ່ຽວຂ້ອງໃນປະເທດທີ່ຈະເຂົ້າໄປກວດ. ການເຂົ້າໄປກວດພິສູດແມ່ນຈະດຳເນີນການໄດ້ກໍ່ຕໍ່ເມື່ອ ປະເທດສະມາຊິກອາຊຽນທີ່ນຳເຂົ້າ ໄດ້ຮັບການຕົກລົງຍິນຍອມເປັນລາຍລັກອັກສອນຈາກຜູ້ສົ່ງອອກ/ຜູ້ຜະລິດ ທີ່ຈະເຂົ້າໄປກວດສະຖານທີ່ຂອງຕົນ. ການບໍ່ຕອບແຈ້ງການຂອງປະເທດສະມາຊິກອາຊຽນທີ່ນຳເຂົ້າ ອາດຈະເຮັດໃຫ້ມີການໂຈະການປະຕິບັດສິດທິພິເສດທາງດ້ານອັດຕາພາສີ.

ຫຼັງຈາກການເຂົ້າໄປກວດພິສູດແລ້ວ, ປະເທດສະມາຊິກອາຊຽນທີ່ນຳເຂົ້າ ຕ້ອງໃຫ້ການຢືນຢັນເປັນລາຍລັກອັກສອນໃຫ້ແກ່ທຸກຝ່າຍທີ່ກ່ຽວຂ້ອງວ່າ ສິນຄ້າທີ່ມີບັນຫານັ້ນມີຄຸນສົມບັດເປັນສິນຄ້າແຫຼ່ງກຳເນີດ ຫຼື ບໍ່. ໃນຂະນະທີ່ລໍຖ້າຜົນຂອງການເຂົ້າໄປກວດພິສູດ, ອາດຈະມີການໂຈະການປະຕິບັດສິດທິພິເສດທາງດ້ານອັດຕາພາສີ.

ຂໍ້ມູນເພີ່ມຕື່ມກ່ຽວກັບຂະບວນການກວດພິສູດຂອງ AWSC ແມ່ນໄດ້ກຳນົດໄວ້ໃນກົດລະບຽບຂໍ້ 18 ແລະ ຂໍ້ 19 ຂອງລະບຽບປະຕິບັດ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງ ATIGA.

## 3.3. ຄວາມແຕກຕ່າງລະຫວ່າງ AWSC, ແບບພິມ ດີ ແບບອີເລັກໂຕຣນິກ (E-FORM D) ແລະ ແບບພິມ ດີ ແບບເຈ້ຍສໍ (FORM D) ຂອງ

ຍັງຄົງສືບຕໍ່ນຳໃຊ້ແບບພິມ ດີ ແບບອີເລັກໂຕຣນິກ (e-Form D) ແລະ ແບບພິມ ດີ ແບບເຈ້ຍສໍ (Form D) ຂອງ ATIGA ເມື່ອ AWSC ໄດ້ຮັບການຈັດຕັ້ງປະຕິບັດແລ້ວ. ໂດຍສ່ວນໃຫຍ່ແລ້ວ, ບັນດາປະເພດຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າເຫຼົ່ານີ້ ຈະຖືກນຳໃຊ້ໂດຍຜູ້ສົ່ງອອກທີ່ບໍ່ສາມາດໄດ້ຮັບສະຖານະ CE ແລະ ອາດຈະຖືກນຳໃຊ້ໂດຍ CE ຖ້າພວກເຂົາຕ້ອງການ.[5]

[5] ສຳລັບຂໍ້ມູນສະເພາະເພີ່ມຕື່ມກ່ຽວກັບແບບພິມ ດີ ແບບເປັນເອກະສານ (Form D) ແລະ ແບບພິມ ດີ ແບບອີເລັກໂຕຣນິກ (e-Form D) ຂອງ CO, ກະລຸນາເບິ່ງກົດລະບຽບຂໍ້ 26-31 ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງ ATIGA.

ຄວາມແຕກຕ່າງຫຼັກໆລະຫວ່າງ OD ພາຍໃຕ້ AWSC, ແບບພິມ ດີ ແບບອີເລັກໂຕຣນິກ (e-Form D) ແລະ ແບບພິມ ດີ ແບບເຈ້ຍສໍ (Form D)ຂອງ ATIGA ແມ່ນສະຫຼຸບໄດ້ດັ່ງນີ້:

| ຄວາມແຕກຕ່າງຫຼັກໆ | AWSC | e-Form D ແລະ Form D |
|---|---|---|
| **ແມ່ນໃຜເປັນຜູ້ອອກຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ** | ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (CE) | ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ |
| **ເວລາທີ່ຕ້ອງໃຊ້ໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ** | ໄວຫຼາຍ | ດົນກວ່າ |
| **ຄວາມຮູ້ກ່ຽວກັບລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າ (ROO) ໂດຍ CE/ຜູ້ສົ່ງອອກ** | ຕ້ອງມີຄວາມຮູ້ກ່ຽວກັບ ROO ຢ່າງກ້ວາງຂວາງ | ຕ້ອງມີຄວາມຮູ້ພຽງພໍກ່ຽວກັບ ROO |
| **ມີພັນທະ ຫຼື ການປະຕິບັດຕາມໂດຍ CE/ຜູ້ສົ່ງອອກ** | ປະຕິບັດຕາມຂໍ້ກຳນົດຕ່າງໆ ຕາມທີ່ໄດ້ແນະນຳໄວ້ໃນລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ຂໍ້ 12A (4) | ຍື່ນເອກະສານສະໜັບສະໜູນທີ່ເໝາະສົມເພື່ອພິສູດແຫຼ່ງກຳເນີດຂອງຜະລິດຕະພັນຕາມ ລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ຂໍ້ 5 ແລະ ສອດຄ່ອງກັບກົດໝາຍ ແລະ ກົດລະບຽບພາຍໃນຂອງປະເທດສະມາຊິກທີ່ສົ່ງອອກ. |
| **ຄ່າໃຊ້ຈ່າຍທາງກົງໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ** | ບໍ່ມີຄ່າໃຊ້ຈ່າຍທາງກົງ | ມີຄ່າໃຊ້ຈ່າຍບໍລິຫານບາງຢ່າງ |

# ພາກທີ II:

## ຄຳຖາມທີ່ມັກຖາມເລື້ອຍໆ




### ບັນດາຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

**1. ເປັນຫຍັງຄວາມສ່ຽງໃນການໃຊ້ OD ໄປໃນທາງຜິດ ຈຶ່ງສຸມໃສ່ CE ທີ່ສະຖານະອາດຈະຖືກຖອນເທົ່ານັ້ນ**

AWSC ແມ່ນໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ສຳລັບຜູ້ສົ່ງອອກທີ່ໄດ້ຮັບອະນຸຍາດ. ສະນັ້ນ, ກົດລະບຽບຂໍ້ 12D ວ່າດ້ວຍ (ການຖອນການອະນຸຍາດ) ແມ່ນໃຊ້ກັບ CE ເທົ່ານັ້ນ.

**2. ຈະເກີດຫຍັງຂຶ້ນກັບຜູ້ນຳເຂົ້າ ຖ້າວ່າຜູ້ກ່ຽວຖືກຈັບໄດ້ວ່າສວຍໃຊ້ OD ທີ່ CE ສະໜອງໃຫ້ໄປໃນທາງທີ່ຜິດ**

ການລົງໂທດຕໍ່ຜູ້ນຳເຂົ້າທີ່ໃຊ້ OD ໄປໃນທາງທີ່ຜິດແມ່ນປະຕິບັດຕາມກົດໝາຍ ແລະ ກົດລະບຽບພາຍໃນຂອງແຕ່ລະປະເທດສະມາຊິກອາຊຽນ. ກະລຸນາຕິດຕໍ່ບັນດາເຈົ້າໜ້າທີ່ທີ່ມີສິດຂອງແຕ່ລະປະເທດສະມາຊິກອາຊຽນ ສຳລັບລະລາຍລະອຽດເພີ່ມຕື່ມ.

**3. ຜູ້ນຳເຂົ້າໃນປະເທດທີ່ນຳເຂົ້າ ຈຳເປັນຕ້ອງມີສະຖານະ CE ເພື່ອໃຫ້ໄດ້ຮັບສິດຜົນປະໂຫຍດຈາກໂຄງການ AWSC ບໍ**

ບໍ່, ຜູ້ນຳເຂົ້າໃນປະເທດທີ່ນຳເຂົ້າ ບໍ່ຈຳເປັນຕ້ອງມີສະຖານະ CE.

**4. ເປັນໄປໄດ້ບໍ ທີ່ກຸ່ມບໍລິສັດ ຈະຍື່ນຄຳຮ້ອງສະຖານະ CE ໄດ້**

ໄດ້. ຖ້າວ່າກຸ່ມບໍລິສັດດັ່ງກ່າວບັນລຸໄດ້ຕາມມາດຖານໃນກົດລະບຽບຂໍ້ 12A ຂອງ OCP ສຳລັບ ROO ໃນ ATIGA ແລະ ມາດຖານພາຍໃນປະເທດ ທີ່ກຳນົດໂດຍປະເທດສະມາຊິກອາຊຽນທີ່ສົ່ງອອກ.

## ບັນດາເຈົ້າໜ້າທີ່ທີ່ມີສິດ

**5. ກ່ຽວກັບພັນທະຂອງ CE, ຈະຖືກກວດສອບການປະຕິບັດຕາມກົດລະບຽບເລື້ອຍປານໃດ**

ຄວາມຖີ່ຂອງການກວດສອບການປະຕິບັດຕາມກົດລະບຽບແມ່ນຂຶ້ນກັບກົດໝາຍ ແລະ ກົດລະບຽບພາຍໃນຂອງແຕ່ລະປະເທດສະມາຊິກອາຊຽນ.

**6. ກ່ອນທີ່ CE ຈະອອກ OD, ຜູ້ກ່ຽວຕ້ອງໄດ້ຍື່ນຄຳຮ້ອງ/ລົງທະບຽນ ຜະລິດຕະພັນຂອງຕົນກັບເຈົ້າໜ້າທີ່ທີ່ມີສິດອຳນາດກ່ອນບໍ?**

ແມ່ນແລ້ວ, CE ຕ້ອງລົງທະບຽນຜະລິດຕະພັນດັ່ງກ່າວກັບເຈົ້າໜ້າທີ່ທີ່ມີສິດອຳນາດກ່ອນ. CE ສາມາດອອກ OD ໄດ້ພຽງແຕ່ ສິນຄ້າທີ່ CE ໄດ້ຮັບອະນຸຍາດອອກ ແລະ ສິນຄ້າທີ່ CE ມີເອກະສານທີ່ເໝາະສົມທັງໝົດ ເພື່ອພິສູດສະຖານະແຫຼ່ງກຳເນີດຂອງສິນຄ້າທີ່ກ່ຽວຂ້ອງ. ກະລຸນາເບິ່ງວັກ 4 (b) ຂອງກົດລະບຽບຂໍ້ 12A ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA:

*" 4. CE ຈະຕ້ອງມີພັນທະດັ່ງຕໍ່ໄປນີ້:*

*(b) ອອກ OD ໃຫ້ແກ່ສິນຄ້າທີ່ CE ໄດ້ຮັບອະນຸຍາດໃຫ້ອອກ OD ໄດ້ເທົ່ານັ້ນ ແລະ ສິນຄ້າທີ່ CE ມີເອກະສານທີ່ເໝາະສົມທັງໝົດ ເພື່ອພິສູດສະຖານະແຫຼ່ງກຳເນີດຂອງສິນຄ້າທີ່ກ່ຽວຂ້ອງໃນເວລາທີ່ອອກໃບແຈ້ງລາຍລະອຽດ."*

## ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ

### 7. ຜົນສະທ້ອນ/ການລົງໂທດ ສຳລັບການອອກ OD ແບບບໍ່ຖືກຕ້ອງທັງແບບບັງເອີນ ແລະ ແບບເຈດຕະນາ ມີຫຍັງແດ່

ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂໍ້ 12D ຂອງ OCP, ການອອກ OD ແບບບໍ່ຖືກຕ້ອງອາດຈະເຮັດໃຫ້ມີການຖອນໃບອະນຸຍາດ. ຊຶ່ງຈະຕ້ອງໄດ້ປະຕິບັດຕາມນັ້ນໃນກໍລະນີທີ່ CE ບໍ່ສາມາດໃຫ້ການຮັບປະກັນໄດ້ຕາມທີ່ກຳນົດໄວ້ໃນກົດລະບຽບຂໍ້ 12A (1) ອີກຕໍ່ໄປ, ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດລະບຽບຂໍ້ 12A (2) ອີກຕໍ່ໄປ ຫຼື ນຳໃຊ້ການອະນຸຍາດໄປໃນທາງທີ່ຜິດເປັນຢ່າງອື່ນ. ການລົງໂທດເພີ່ມຕື່ມ ແມ່ນໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງ AMS. ກະລຸນາຕິດຕໍ່ເຈົ້າໜ້າທີ່ທີ່ມີສິດຂອງແຕ່ລະປະເທດສະມາຊິກອາຊຽນສຳລັບລະລາຍລະອຽດເພີ່ມຕື່ມ.

### 8. ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບ OD, ການຮຽກຮ້ອງເອົາສິດທິພິເສດທາງດ້ານອັດຕາພາສີຂອງ ATIGA ໂດຍອີງໃສ່ OD ນັ້ນ ຈະຖືກປະຕິເສດໂດຍອັດຕະໂນມັດ ຫຼື ຈະຕ້ອງມີຂະບວນການກວດພິສູດເປັນບາດກ້າວທຳອິດກ່ອນ

ກະລຸນາເບິ່ງວັກ 3 ແລະ 4 ຂອງກົດລະບຽບຂໍ້ 13 ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ຄືດັ່ງຕໍ່ໄປນີ້:

*"3. ໃນກໍລະນີທີ່ OD ຖືກປະຕິເສດໂດຍເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າ, OD ທີ່ມີບັນຫາດັ່ງກ່າວຈະຕ້ອງຖືກສົ່ງຄືນໃຫ້ເຈົ້າໜ້າທີ່ທີ່ມີສິດພາຍໃນກຳນົດເວລາທີ່ເໝາະສົມ ບໍ່ໃຫ້ເກີນຫົກສິບ (60) ວັນ. ເຈົ້າໜ້າທີ່ທີ່ມີສິດຈະໄດ້ຮັບແຈ້ງການຢ່າ ງຖືກຕ້ອງເຖິງສາເຫດທີ່ຖືກປະຕິເສດຈາກການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີ.*

*4. ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຖືກປະຕິເສດ, ດັ່ງທີ່ໄດ້ກຳນົດໄວ້ໃນວັກ 2 ແລະ 3 ກ່ອນໜ້າຂອງກົດລະບຽບສະບັບນີ້, ປະເທດສະມາຊິກທີ່ນຳເຂົ້າຄວນຍອມຮັບ ແລະ ພິຈາລະນາການຊີ້ແຈງຈາກເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ເຈົ້າໜ້າທີ່ທີ່ມີສິດ ແລະ ປະເມີນອີກຄັ້ງວ່າ ໃບຢັ້ງຢືນແຫຼ່ງກຳເນີດ ສາມາດຍອມຮັບໄດ້ສຳລັບການອະນຸຍາດໃຫ້ປະຕິບັດສິດທິພິເສດທາງດ້ານອັດຕາພາສີ ຫຼື ບໍ່. ການຊີ້ແຈງດັ່ງກ່າວຄວນໃຫ້ການແກ້ໄຂສາເຫດຂອງການປະຕິເສດການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີທີ່ປະເທດສະມາຊິກທີ່ນຳເຂົ້າ ໄດ້ຍົກຂຶ້ນມາໃຫ້ລະອຽດ ແລະ ຄົບຖ້ວນ."*

ສຳລັບລາຍລະອຽດເພີ່ມຕື່ມ, ກະລຸນາເບິ່ງກົດລະບຽບຂໍ້ 16, 18, 19 ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA.

### 9. OD ໃນຮູບແບບຂອງໃບແຈ້ງລາຄາ ຈະຖືກຍອມຮັບໃນທຸກປະເທດສະມາຊິກອາຊຽນບໍ

ແມ່ນແລ້ວ, CE ຈະຍື່ນ OD ທີ່ສາມາດເຮັດໄດ້ໃສ່ໃນໃບແຈ້ງລາຄາ ຫຼື ເອກະສານທາງການຄ້າອື່ນໆ (ໃບແຈ້ງລາຍລະອຽດໃບຮຽກເກັບເງິນ, ໃບສັ່ງສົ່ງສິນຄ້າ ຫຼື ໃບແຈ້ງລາຍການຫຸ້ມຫໍ່ສິນຄ້າ), ຖ້າວ່າມີຂໍ້ມູນທັງໝົດທີ່ຕ້ອງການຕາມເອກະສານຄັດຕິດ 1 (ລາຍຊື່ກ່ຽວກັບຂໍ້ມູນທີ່ຕ້ອງການ) ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ຢູ່ໃນເອກະສານ. ອາດຈະໄດ້ນຳໃຊ້ເອກະສານທາງການຄ້າອື່ນໆເທົ່ານັ້ນ ຖ້າບໍ່ມີໃບແຈ້ງລາຄາໃນເວລາສົ່ງອອກ.

ຮູບແບບ OD ທີ່ແນະນຳ ຊຶ່ງໄດ້ຮັບການຕົກລົງເຫັນດີໂດຍ AMS ແມ່ນມີຢູ່ທີ່:

https://asean.org/storage/2012/05/SCAROO29_anx13_ag06.1.3c_Indicative-Format-of-Origin-Declaration-13-Mar-19-2.pdf

**10. ໃນກໍລະນີທີ່ບໍ່ມີໃບແຈ້ງລາຄາ, ເປັນໄປໄດ້ບໍທີ່ CE ຈະອອກ OD ໃຫ້ແກ່ໃນເອກະສານທາງການຄ້າອື່ນໆ? ຖ້າບໍ່ດັ່ງນັ້ນ, CE ຄວນອອກ OD ໃນໃບແຈ້ງລາຍການຫຸ້ມຫໍ່ສິນຄ້າແທນບໍ**

OD ພາຍໃຕ້ໂຄງການ AWSC ສາມາດອອກໄດ້ໃນໃບແຈ້ງລາຄາ ຫຼື ເອກະສານທາງການຄ້າອື່ນໆ (ໃບແຈ້ງລາຍລະອຽດໃບແຈ້ງລາຄາ, ໃບສັ່ງສິ່ງສິນຄ້າ ຫຼື ໃບແຈ້ງລາຍການຫຸ້ມຫໍ່ສິນຄ້າ), ຖ້າວ່າມີຂໍ້ມູນທັງໝົດທີ່ຕ້ອງການຕາມເອກະສານຄັດຕິດ 1 (ລາຍຊື່ກ່ຽວກັບຂໍ້ມູນທີ່ຕ້ອງການ) ຂອງການດຳເນີນການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ຢູ່ໃນເອກະສານ. ອາດຈະໄດ້ນຳໃຊ້ເອກະສານທາງການຄ້າອື່ນໆເທົ່ານັ້ນ ຖ້າບໍ່ມີໃບແຈ້ງລາຄາໃນເວລາສົ່ງອອກ.

ຮູບແບບ OD ທີ່ແນະນຳທີ່ໄດ້ຮັບການຕົກລົງໂດຍ AMS ແມ່ນສາມາດເຂົ້າເບິ່ງໄດ້ທີ່:

https://asean.org/storage/2012/05/SCAROO29_anx13_ag06.1.3c_Indicative-Format-of-Origin-Declaration-13-Mar-19-2.pdf

**11. ຈະເຮັດແນວໃດເພື່ອຮັບປະກັນວ່າ OD ທີ່ອອກພາຍໃຕ້ໂຄງການ AWSC ຈະຖືກຍອມຮັບຈາກປະເທດທີ່ນຳເຂົ້າ**

OD ຈະຖືກຍອມຮັບ ຖ້າປະຕິບັດຕາມ ລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA, ລວມທັງຂໍ້ມູນທີ່ຕ້ອງການຂັ້ນຕ່ຳ (ເອກະສານຄັດຕິດ **1** ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA).

ຮູບແບບທີ່ແນະນຳຕໍ່ໄປນີ້ສາມາດນຳໃຊ້ສຳລັບ OD ໄດ້:

https://asean.org/storage/2012/05/SCAROO29_anx13_ag06.1.3c_Indicative-Format-of-Origin-Declaration-13-Mar-19-2.pdf

**12. CE ຈະໄດ້ຮັບອະນຸຍາດໃຫ້ອອກ OD ແບບຕໍ່ເນື່ອງ (back-to-back OD) ພາຍໃຕ້ໂຄງການ AWSC ບໍ**

ແມ່ນແລ້ວ, ອາດຈະສາມາດອອກ OD ແບບຕໍ່ເນື່ອງ ໄດ້ ຖ້າປະຕິບັດໄດ້ຕາມວັກ 2 ຂອງກົດລະບຽບຂໍ້ 11 ວ່າດ້ວຍ (ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ) ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA.

**13. ບັນດາອົງການຈັດຕັ້ງຕ່າງໆໃນບັນດາປະເທດທີ່ນຳເຂົ້າຈະຍອມຮັບ OD ສະບັບສຳເນົາ ຫຼື ສະບັບສະແກນບໍ**

ການຍອມຮັບ OD ສະບັບສຳເນົາ ຫຼື ສະບັບສະແກນແມ່ນຂຶ້ນກັບກົດໝາຍ ແລະ ກົດລະບຽບພາຍໃນຂອງແຕ່ລະປະເທດສະມາຊິກອາຊຽນ. ປະເທດສິງກະໂປສາມາດຍອມຮັບເອົາ OD ສະບັບສຳເນົາ ຫຼື ສະແກນ. ສຳລັບປະເທດສະມາຊິກອາຊຽນອື່ນໆ, ຂໍແນະນຳໃຫ້ຜູ້ຄ້າຂາຍຕິດຕໍ່ຫາເຈົ້າໜ້າທີ່ພາສີ ສຳລັບຂໍ້ມູນເພີ່ມຕື່ມ.

**14. ຈະເກີດຫຍັງຂຶ້ນກັບ OD ພາຍໃຕ້ໂຄງການ SCPP1 ທີ່ມາຮອດປະເທດປາຍທາງຫຼັງຈາກທີ່ໂຄງການ AWSC ມີຜົນບັງຄັບໃຊ້ໃນວັນທີ 20 ກັນຍາ 2020 ນີ້**

ໂຄງການ SCPP1 ໄດ້ຖືກຍົກເລີກນັບແຕ່ວັນທີ 20 ກັນຍາ 2020 ເປັນຕົ້ນໄປ. ຜູ້ສົ່ງອອກສາມາດອອກ OD ພາຍໃຕ້ SCPP1 ຈົນຮອດວັນທີ 19 ກັນຍາ 2020. OD ພາຍໃຕ້ໂຄງການ SCPP1 ແມ່ນມີຜົນບັງຄັບໃຊ້ເປັນເວລາໜຶ່ງ (1) ປີ ນັບແຕ່ມື້ອອກ. ດັ່ງນັ້ນ, OD ທີ່ອອກໃນວັນທີ 19 ກັນຍາ 2020 ຍັງຈະມີຜົນບັງຄັບໃຊ້ຈົນຮອດວັນທີ 18 ກັນຍາ 2021.

ສຳລັບໂຄງການ SCPP2, ຜູ້ສົ່ງອອກກໍຍັງສາມາດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃສ່ໃນໃບແຈ້ງລາຄາ (invoice declaration) ພາຍໃຕ້ໂຄງການ 2 ຈົນຮອດວັນທີ 19 ກັນຍາ 2020 ເຊັ່ນກັນ. ເຊັ່ນດຽວກັນກັບໂຄງການ 1, ການອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃສ່ໃນໃບແຈ້ງລາຄາພາຍໃຕ້ໂຄງການ 2 ແມ່ນມີຜົນບັງຄັບໃຊ້ເປັນເວລາ 1 ປີ ນັບແຕ່ມື້ອອກ.

**15. OD ພາຍໃຕ້ໂຄງການ AWSC ຈະປ່ຽນແທນແບບພິມ ດີ ແບບເຈ້ຍສໍ (Form D) ແລະ ແບບພິມ ດີ ແບບອີເລັກໂຕຣນິກ (e-Form D)ບໍ**

ບໍ່. CE ສາມາດເລືອກທີ່ຈະໃຊ້ OD ພາຍໃຕ້ AWSC, ແບບພິມ ດີ ແບບເຈ້ຍສໍ (Form D) ຫຼື ແບບພິມ ດີ ແບບອີເລັກໂຕຣນິກ (e-Form D) ຫຼື ໃຊ້ໝົດທຸກແບບ.

**16. CE ມີສິດທີ່ຈະເລືອກວ່າຈະໃຊ້ແບບພິມ ດີ ແບບອີເລັກໂຕຣນິກ (e-Form D), ແບບພິມ ດີ ແບບເຈ້ຍສໍ (Form D) ຫຼື OD ພາຍໃຕ້ AWSC ບໍ**

ແມ່ນແລ້ວ, CE ມີສິດທີ່ຈະເລືອກວ່າຈະໃຊ້ແບບພິມ ດີ ແບບອີເລັກໂຕຣນິກ (e-Form D), ແບບພິມ ດີ ແບບເຈ້ຍສໍ (Form D) ຫຼື OD ພາຍໃຕ້ໂຄງການ AWSC. ເຖິງຢ່າງໃດກໍຕາມ,

ປະເທດມາເລເຊຍບໍ່ໄດ້ອອກແບບພິມ ດີ ແບບເຈ້ຍສໍ (Form D) ອີກຕໍ່ໄປ ເພື່ອເປັນການຊຸກຍູ້ການນຳໃຊ້ແບບພິມ ດີ ແບບອີເລັກໂຕຣນິກ (e-Form D)ຂອງ ATIGA. ກະລຸນາຕິດຕໍ່ເຈົ້າໜ້າທີ່ທີ່ມີສິດຂອງແຕ່ລະປະເທດສະມາຊິກອາຊຽນ ສຳລັບລະລາຍລະອຽດເພີ່ມຕື່ມ.

**17. CE ໄດ້ຮັບອະນຸຍາດໃຫ້ເລືອກລະຫັດ HS 6 ຕົວເລກ ຫຼື ລະຫັດ AHTN 8 ຕົວເລກ ຫຼື ລະຫັດການຕັ້ງຊື່ພາສີແຫ່ງຊາດ 10 ຕົວເລກ**

ອະນຸຍາດໃຫ້ສາມາດເລືອກໄດ້ ບໍ່ວ່າຈະເປັນລະຫັດ HS 6 ຕົວເລກ ຫຼື ລະຫັດ AHTN 8 ຕົວເລກ ຖ້າວ່າລະຫັດເຫຼົ່ານັ້ນໃນ OD ແມ່ນກົງກັບລະຫັດທີ່ໄດ້ລົງທະບຽນໄວ້ພາຍໃຕ້ລະບົບຖານຂໍ້ມູນ CE ຂອງ AWSC.

**18. CE ຈະໄດ້ຮັບອະນຸຍາດໃຫ້ອອກ OD ສຳລັບໃບແຈ້ງລາຄາຂອງປະເທດທີສາມພາຍໃຕ້ໂຄງການ AWSC ບໍ? ຖ້າໄດ້, CE ຄວນອອກ OD ແນວໃດ ໃນເມື່ອໃບແຈ້ງລາຄາດັ່ງກ່າວບໍ່ແມ່ນ CE ເປັນຜູ້ອອກ**

ແມ່ນແລ້ວ, CE ອາດຈະອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃຫ້ແກ່ເອກະສານທາງການຄ້າອື່ນໆ (ເຊັ່ນ: ໃບແຈ້ງລາຍລະອຽດລາຄາສິນຄ້າ, ໃບສັ່ງສິ່ງສິນຄ້າ ຫຼື ໃບແຈ້ງລາຍການຫຸ້ມຫໍ່ສິນຄ້າ) ຖ້າການຂົນສົ່ງເປັນກໍລະນີຂອງການອອກໃບແຈ້ງລາຄາຂອງປະເທດທີສາມ ຕາມກົດລະບຽບຂໍ້ 23 (ການອອກໃບແຈ້ງລາຄາຂອງປະເທດທີສາມ) ຂອງລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA.

## ຜູ້ມີສິດອຳນາດລົງລາຍເຊັນ

**19. ເປັນໄປໄດ້ບໍ ທີ່ຜູ້ສົ່ງຕໍ່ສິນຄ້າ ຫຼື ຫ້ອງການຕົວແທນພາສີ ສາມາດເປັນຕົວແທນຂອງ CE ໃນຖານະຜູ້ມີສິດອຳນາດລົງລາຍເຊັນ**

ຜູ້ສົ່ງຕໍ່ສິນຄ້າ ຫຼື ຫ້ອງການຕົວແທນພາສີ, ຖ້າໄດ້ຮັບການແຕ່ງຕັ້ງຈາກ CE ຈະສາມາດເປັນຕົວແທນຂອງ CE ໃນຖານະຜູ້ມີສິດອຳນາດລົງລາຍເຊັນ ຫຼື ບໍ່ ແມ່ນຂຶ້ນກັບກົດໝາຍ ແລະ ກົດລະບຽບພາຍໃນ ຂອງແຕ່ລະປະເທດສະມາຊິກອາຊຽນ.

## ຄຳຖາມທົ່ວໄປ

**20. ໂຄງການ AWSC ຈະມີຜົນບັງຄັບໃຊ້ໃນພາກພື້ນອາຊຽນເມື່ອໃດ**

ວັນທີ 20 ກັນຍາ 2020.

**21. ຈະມີການຈັດກອງປະຊຸມສຳມະນາໃນລະດັບຊາດບໍ**

ແມ່ນແລ້ວ, ປະເທດສະມາຊິກອາຊຽນສ່ວນໃຫຍ່ມີການຈັດກອງປະຊຸມ ສຳມະນາແຫ່ງຊາດກ່ຽວກັບ AWSC. ກະລຸນາຕິດຕໍ່ເຈົ້າໜ້າທີ່ທີ່ມີສິດໃນປະເທດຂອງທ່ານ ຫຼື ຈຸດເນັ້ນໜັກຂອງ SC-AROO ສຳລັບຂໍ້ມູນເພີ່ມຕື່ມ.

**22. ມີກຳນົດເວລາຕ້ອງເຮັດໃຫ້ສຳເລັດທີ່ໜ່ວຍງານຂອງລັດຖະບານໄດ້ຕົກລົງກັນໄວ້ ສຳລັບທຸກໆຂັ້ນຕອນຂອງຂະບວນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງບໍ**

ມີການກຳນົດໄລຍະເວລາໄວ້ໃນລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງ ATIGA ຊຶ່ງປະກອບມີຄື:

- OD ຕ້ອງມີຜົນບັງຄັບໃຊ້ເປັນເວລາ 12 ເດືອນນັບແຕ່ວັນອອກ;
- OD ທີ່ຖືກປະຕິເສດ ຄວນຖືກສົ່ງກັບຄືນໄປຫາເຈົ້າໜ້າທີ່ທີ່ມີສິດອຳນາດຂອງປະເທດທີ່ສົ່ງອອກບໍ່ໃຫ້ເກີນ 60 ວັນ;
- ມີໄລຍະເວລາຫົກເດືອນ ສຳລັບການກວດກາຍ້ອນຫຼັງ;
- ມີໄລຍະເວລາຫົກເດືອນ ສຳລັບການເຂົ້າໄປກວດພິສູດ ແລະ
- ແຕ່ລະປະເທດສະມາຊິກອາຊຽນອາດຈະມີກຳນົດເວລາຂອງຕົນເອງໃນການໃຫ້ອະນຸຍາດສະຖານະ CE. ກະລຸນາຕິດຕໍ່ບັນດາກະຊວງ, ໜ່ວຍງານ ຫຼື ເຈົ້າໜ້າທີ່ທີ່ມີສິດ ສຳລັບລາຍລະອຽດເພີ່ມຕື່ມ.

# ພາກທີ III:

## ບັນດາອົງການທີ່ມີສິດອຳນາດ



## ລາຍຊື່ຂອງບັນດາເຈົ້າໜ້າທີ່ທີ່ມີສິດຂອງ AWSC (ຕາມທີ່ໄດ້ແຈ້ງໃຫ້ກອງເລຂາອາຊຽນຮອດວັນທີ 15 ພະຈິກ 2020)

| ບັນດາປະເທດສະມາຊິກ | ບັນດາເຈົ້າໜ້າທີ່ທີ່ມີສິດ | ບັນດາປະເທດສະມາຊິກ | ບັນດາເຈົ້າໜ້າທີ່ທີ່ມີສິດ |
|---|---|---|---|
| **ບູໄນ** | ກະຊວງການເງິນ ແລະ ເສດຖະກິດ ພະແນກການຄ້າ<br>http://www.bdnsw.gov.bn | **ມຽນມາ** | ກະຊວງການຄ້າ<br>https://onlineco.myanmartradenet.com |
| **ກຳປູເຈຍ** | ຄະນະກຳມະການຊີ້ນຳ<br>https://nsw.gov.kh/ | **ຟີລິບປິນ** | ສຳນັກງານພາສີ<br>https://customs.gov.ph/ |
| **ອິນໂດເນເຊຍ** | ຫ້ອງການກົມການຄ້າຕ່າງປະເທດ, ກະຊວງການຄ້າ<br>https://e-ska.kemendag.go.id | **ສິງກະໂປ** | ກົມພາສີສິງກະໂປ<br>https://www.customs.gov.sg |

| ບັນດາປະເທດສະມາຊິກ | ບັນດາເຈົ້າໜ້າທີ່ທີ່ມີສິດ | ບັນດາປະເທດສະມາຊິກ | ບັນດາເຈົ້າໜ້າທີ່ທີ່ມີສິດ |
|---|---|---|---|
| **ສປປ ລາວ** | ກະຊວງອຸດສະຫະກຳ ແລະ ການຄ້າ<br>https://www.laonsw.net | **ໄທ** | ກົມການຄ້າຕ່າງປະເທດ<br>http://self-cert.dft.go.th/self-cert/ |
| **ມາເລເຊຍ** | ກະຊວງການຄ້າ ແລະ ອຸດສາຫະກຳສາກົນ<br>www.miti.gov.my | **ຫວຽດນາມ** | ກະຊວງອຸດສະຫະກຳ ແລະ ການຄ້າ<br>https://vnsw.gov.vn |

# ພາກທີ IV:

## ເອກະສານຊ້ອນທ້າຍ




### ເອກະສານຊ້ອນທ້າຍ 1: ລະບຽບປະຕິບັດກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບໃໝ່ ທີ່ມີຜົນບັງຄັບໃຊ້ໃນວັນທີ 20 ກັນຍາ 2020 (ເອກະສານຊ້ອນທ້າຍ 8 ຂອງ ATIGA)

### ເອກະສານຊ້ອນທ້າຍ 2: ຮູບແບບຂອງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າຕົ້ນສະບັບ ແລະ ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງທີ່ແນະນຳ

ເອກະສານຊ້ອນທ້າຍ 1

## ເອກະສານຊ້ອນທ້າຍ 8

### ຂັ້ນຕອນການດຳເນີນການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ ໝວດ 3

ຈຸດປະສົງໃນການຈັດຕັ້ງປະຕິບັດລະບຽບແຫຼ່ງກຳເນີດສິນຄ້າ ທີ່ໄດ້ກຳນົດໄວ້ໃນ ໝວດ 3 ຂອງສັນຍາສະບັບນີ້, ຕ້ອງປະຕິບັດຕາມຂັ້ນຕອນການດຳເນີນງານ ກ່ຽວກັບ ການອອກ ແລະ ຢັ້ງຢືນຫຼັກຖານສະແດງແຫຼ່ງກຳເນີດ ແລະ ບັນຫາການບໍລິຫານອື່ນໆທີ່ກ່ຽວຂ້ອງ ດັ່ງຕໍ່ໄປນີ້:

### ລະບຽບ 1
### ນິຍາມ

(a) **ASW** ໝາຍເຖິງ ການບໍລິການປະຕູດຽວຂອງອາຊຽນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 5 (a) ຂອງ PLF;

(b) **ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ** ໝາຍເຖິງ ຫຼັກຖານຢັ້ງຢືນແຫຼ່ງກຳເນີດທີ່ອອກໂດຍປະເທດສະມາຊິກສົ່ງອອກ ໂດຍອີງໃສ່ຫຼັກຖານການຢັ້ງຢືນແຫຼ່ງກຳເນີດທີ່ອອກໂດຍປະເທດສະມາຊິກສົ່ງອອກທຳອິດ;

(c) **ຜູ້ສົ່ງອອກທີ່ໄດ້ສິດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (CE)** ໝາຍເຖິງ ຜູ້ສົ່ງອອກທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ເພື່ອອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທີ່ສົ່ງອອກດ້ວຍຕົນເອງ;

(d) **ເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າ** ໝາຍເຖິງ ອຳນາດການປົກຄອງຂອງປະເທດສະມາຊິກສົ່ງອອກທີ່ຖືກກຳນົດໃຫ້ອະນຸຍາດ CE;

(e) **ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D)** ໝາຍເຖິງ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ທີ່ມີໂຄງສ້າງສອດຄ່ອງກັບເອກະສານແນະນຳ ກ່ຽວກັບ ການກຳນົດ ແລະ ຂະບວນການປະຕິບັດຕາມເນື້ອໃນຂອງ

ATIGA e-Form D ແລະ ຖືກສົ່ງຜ່ານທາງອີເລັກໂຕຣນິກລະຫວ່າງບັນດາປະເທດສະມາຊິກຜ່ານທາງ ASW ໂດຍສອດຄ່ອງກັບຂໍ້ກຳນົດດ້ານຄວາມປອດໄພທີ່ລະບຸໄວ້ໃນ ມາດຕາ 9 ຂອງ PLF;

(f) **ຜູ້ສົ່ງອອກ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນທີ່ຕັ້ງຢູ່ໃນອານາເຂດຂອງປະເທດສະມາຊິກທີ່ບຸກຄົນດັ່ງກ່າວສົ່ງອອກ;

(g) **ຜູ້ນຳເຂົ້າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນທີ່ຕັ້ງຢູ່ໃນອານາເຂດຂອງປະເທດສະມາຊິກທີ່ບຸກຄົນດັ່ງກ່າວນຳສິນຄ້າເຂົ້າ;

(h) **ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ** ໝາຍເຖິງ ອຳນາດການປົກຄອງຂອງປະເທດສະມາຊິກສົ່ງອອກທີ່ຖືກກຳນົດໃຫ້ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແລະ ແຈ້ງໃຫ້ປະເທດສະມາຊິກອື່ນໆທັງໝົດອີງຕາມເອກະສານຊ້ອນທ້າຍນີ້;

(i) **NSW** ໝາຍເຖິງ ການບໍລິການປະຕູດຽວແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 (c) ຂອງ PLF;

(j) **ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ** ໝາຍເຖິງ ການແຈ້ງ ກ່ຽວກັບ ແຫຼ່ງກຳເນີດຂອງສິນຄ້າທີ່ສົ່ງອອກໂດຍ CE ໂດຍສອດຄ່ອງກັບລະບຽບ 12 B;

(k) **PLF** ໝາຍເຖິງ ອະນຸສັນຍາ ກ່ຽວກັບ ຂອບກົດໝາຍເພື່ອຈັດຕັ້ງປະຕິບັດແນວທາງດຽວກັນຂອງອາຊຽນ ທີ່ໄດ້ສ້າງຂຶ້ນທີ່ນະຄອນຫຼວງ ຮ່າໂນ້ຍ, ປະເທດ ຫວຽດນາມ ໃນວັນທີ 4 ກັນຍາ 2015;

(l) **ຜູ້ຜະລິດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນທີ່ປະຕິບັດການຜະລິດ, ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 (j) ຂອງສັນຍາສະບັບນີ້, ໃນດິນແດນຂອງປະເທດສະມາຊິກ; ແລະ

(m) **ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ** ໝາຍເຖິງ ເອກະສານທີ່ຢັ້ງຢືນວ່າສິນຄ້າສົ່ງອອກຖືກ ຕ້ອງຕາມລະບຽບຂອງຂໍ້ກຳນົດແຫຼ່ງກຳເນີດທີ່ໄດ້ກຳນົດໄວ້ໃນ ໝວດ 3 ຂອງສັນຍາສະບັບນີ້.

## ລະບຽບ 1 A
## ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ

ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ອາດຈະເປັນໃນຮູບແບບຂອງ:

(a) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D);

(b) ໃບຢັ້ງຢືນແຫຼ່ງກຳເນີດແບບອີເລັກໂຕຣນິກ (e-Form D); ຫຼື

(c) ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ.

## ລະບຽບ 2
### ແບບຢ່າງລາຍເຊັນ ແລະ ກາປະທັບທາງການຂອງອົງການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ຖານຂໍ້ມູນການຢັ້ງຢືນດ້ວຍຕົນເອງຂອງອາຊຽນ

1. ແຕ່ລະປະເທດສະມາຊິກຕ້ອງສະເໜີບັນຊີຊື່, ທີ່ຢູ່, ແບບຢ່າງລາຍເຊັນ ແລະ ກາປະທັບທາງການຂອງເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທັງໃນຮູບແບບເອກະສານ ແລະ ດິຈິຕອນ, ໂດຍຜ່ານກອງເລຂາອາຊຽນເພື່ອເຜີຍແຜ່ໃຫ້ປະເທດສະມາຊິກອື່ນໆ ໃນຮູບແບບດິຈິຕອນ. ຖ້າມີການປ່ຽນແປງໃດໆ ໃນລາຍຊື່ທີ່ກ່າວມານັ້ນ ຈະຕ້ອງສະໜອງໃຫ້ໃນລັກສະນະດຽວກັນເພື່ອໃຫ້ຝ່າຍຕ່າງໆຮັບຊາບໂດຍທັນທີ.

2. ແບບຢ່າງລາຍເຊັນ ແລະ ກາປະທັບທາງການຂອງເຈົ້າໜ້າທີ່ອອກຢັ້ງຢືນແຫຼ່ງກຳເນີດສິນຄ້າ, ສັງລວມໂດຍກອງເລຂາອາຊຽນ, ຈະຖືກປັບປຸງທຸກໆປີ. ໃບຢັ້ງຢືນແຫຼ່ງກຳເນີດໃດໆ (ແບບພິມ D) ທີ່ອອກໂດຍເຈົ້າໜ້າທີ່ບໍ່ໄດ້ລວມເຂົ້າໃນບັນຊີລາຍຊື່ທີ່ກ່າວເຖິງໃນວັກ 1 ຈະບໍ່ຖືກນັບຖືໂດຍປະເທດສະມາຊິກທີ່ໄດ້ຮັບ.

3. ເຖິງແມ່ນວ່າໃນວັກ 1 ແລະ 2, ໄດ້ລະບຸວ່າປະເທດສະມາຊິກພຽງແຕ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D), ແຕ່ປະເທດສະມາຊິກບໍ່ຈຳເປັນຕ້ອງໃຫ້ລາຍຊື່ຂອງແບບຢ່າງລາຍເຊັນ ແລະ ປະທັບຕາທາງການຂອງອົງການອອກໃບຢັ້ງຢືນຂອງຕົນ.

4. ທັນທີຫຼັງຈາກທີ່ໄດ້ຮັບການອະນຸມັດສະຖານະພາບ CE, ແຕ່ລະປະເທດສະມາຊິກຕ້ອງສົ່ງລວມເອົາລາຍລະອຽດໃນຖານຂໍ້ມູນການຢັ້ງຢືນດ້ວຍຕົນເອງຂອງອາຊຽນ ດັ່ງລຸ່ມນີ້:
   - (a) ຊື່ ແລະ ທີ່ຢູ່ຂອງບໍລິສັດຕາມກົດໝາຍ;
   - (b) ລະຫັດການອະນຸຍາດ CE;
   - (c) ວັນອອກ ແລະ ວັນໝົດອາຍຸ, ຖ້າເປັນໄປໄດ້, ການອະນຸຍາດ CE, ຖ້າມີ;
   - (d) ລາຍຊື່ຜະລິດຕະພັນທີ່ໄດ້ຮັບອະນຸຍາດ, ລວມທັງລາຍລະອຽດລະຫັດຂອງຜະລິດຕະພັນ HS ໃນລະຫັດ 6 ຕົວເລກ ຫຼື ລະຫັດ AHTN/s[1] ແລະ
   - (e) ລາຍຊື່ຜູ້ລົງລາຍເຊັນທີ່ໄດ້ຮັບອະນຸຍາດ ແລະ ແບບຢ່າງລາຍເຊັນທີ່ກ່ຽວຂ້ອງ, ບໍ່ເກີນສິບ (10)[2] ຄົນຕໍ່ບໍລິສັດ[3].

   ຖ້າມີການປ່ຽນແປງໃດໆໃນຂໍ້ຍ່ອຍ (a) ເຖິງ (e) ຂ້າງເທິງຈະຕ້ອງສະໜອງແບບດຽວກັນໂດຍທັນທີ. ການຖອນ ຫຼື ໂຈະການອະນຸຍາດກໍຈະຖືກລວມເຂົ້າໃນແບບດຽວກັນ.

5. ກອງເລຂາອາຊຽນ ຕ້ອງເປັນຜູ້ຮັກສາຖານຂໍ້ມູນການຢັ້ງຢືນດ້ວຍຕົນເອງໃນອາຊຽນ, ຊຶ່ງປະເທດສະມາຊິກສາມາດເຂົ້າເບິ່ງຜ່ານອອນລາຍໄດ້.

6. ໃບແຈ້ງລາຍລະອຽດແຫຼ່ງກໍາເນີດສິນຄ້າໃດໜຶ່ງທີ່ດໍາເນີນການໂດຍຜູ້ສົ່ງອອກ ຫຼື ຜູ້ລົງລາຍເຊັນທີ່ບໍ່ໄດ້ລວມເຂົ້າໃນຖານຂໍ້ມູນ ຫຼື ສໍາລັບຜະລິດຕະພັນທີ່ບໍ່ລວມເຂົ້າໃນຖານຂໍ້ມູນຈະບໍ່ໄດ້ຮັບການຢັ້ງຢືນ ໂດຍປະເທດສະມາຊິກປາຍທາງ.

## ລະບຽບ 3
## ເອກະສານເພີ່ມຕື່ມ

1. ສໍາລັບຈຸດປະສົງໃນການກໍານົດສະຖານະພາບແຫຼ່ງກໍາເນີດ, ເຈົ້າໜ້າທີ່ອອກຢັ້ງຢືນ ຫຼື ອົງການຈັດຕັ້ງອອກອະນຸຍາດມີສິດຮ້ອງຂໍເອກະສານເພີ່ມຕື່ມ ຫຼື ດໍາເນີນການກວດກາທີ່ເຫັນວ່າເໝາະສົມໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງປະເທດສະມາຊິກ.

---

[1] ຄວາມຈໍາເປັນໃນການຮັກສາຂໍ້ກໍານົດນີ້ແມ່ນຕ້ອງໄດ້ກວດກາພາຍຫຼັງສອງ (2) ປີ ນັບແຕ່ມື້ປະຕິບັດການຢັ້ງຢືນຕົນເອງທົ່ວອາຊຽນ.
[2] ຄວາມຈໍາເປັນໃນການຮັກສາຂໍ້ກໍານົດນີ້ແມ່ນຕ້ອງໄດ້ກວດກາພາຍຫຼັງສອງ (2) ປີ ນັບແຕ່ມື້ປະຕິບັດການຢັ້ງຢືນຕົນເອງທົ່ວອາຊຽນ.
[3] ຄວາມຈໍາເປັນໃນການຮັກສາຂໍ້ກໍານົດນີ້ແມ່ນຕ້ອງໄດ້ກວດກາພາຍຫຼັງສອງ (2) ປີ ນັບແຕ່ມື້ປະຕິບັດການຢັ້ງຢືນຕົນເອງທົ່ວອາຊຽນ.

2. ປະເທດສະມາຊິກໄດ້ຮັບການຊຸກຍູ້ໃຫ້ອະນຸຍາດ ໃຫ້ຍື່ນເອກະສານເພີ່ມຕື່ມຕື່ມທາງອີເລັກໂຕຣນິກ, ຖ້າມີ, ເພື່ອດຳເນີນການກວດກາທີ່ກ່ຽວຂ້ອງກັບການພິສູດແຫຼ່ງກຳເນີດສິນຄ້າ, ຖືວ່າເໝາະສົມໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງປະເທດສະມາຊິກ.

## ລະບຽບ 4

### ການກວດສອບກ່ອນການສົ່ງອອກ

1. ຜູ້ຜະລິດ ແລະ/ຫຼື ຜູ້ສົ່ງອອກ, ຫຼື ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດດ້ວຍຕົນເອງ, ນຳໃຊ້ກັບອົງການອອກ ຫຼື ອົງການທີ່ມີສິດອຳນາດໃນການອອກການພິສູດແຫຼ່ງກຳເນີດສິນຄ້າ ຫຼື ເປັນ CE, ການຮ້ອງຂໍການກວດສອບກ່ອນການສົ່ງອອກແຫຼ່ງກຳເນີດຂອງສະຖານະພາບດີ ຫຼື CE, ອີງຕາມກົດໝາຍ ແລະ ລະບຽບຂອງປະເທດສະມາຊິກ. ຜົນຂອງການກວດກາ, ຊຶ່ງຕ້ອງໄດ້ທົບທວນຄືນເປັນແຕ່ລະໄລຍະ ຫຼື ທຸກຄັ້ງທີ່ເໝາະສົມ, ຈະຖືກຍອມຮັບເປັນຫຼັກຖານສະໜັບສະໜູນໃນການກຳນົດແຫຼ່ງກຳເນີດຂອງສິນຄ້າດັ່ງກ່າວ ຈະຖືກສົ່ງອອກຫຼັງຈາກນັ້ນ. ການກວດກາກ່ອນການສົ່ງອອກອາດຈະບໍ່ຖືກນຳໃຊ້ກັບສິນຄ້າ, ໂດຍຮູບແບບຂອງຕົວມັນເອງ, ແຫຼ່ງກຳເນີດສາມາດກຳນົດໄດ້ງ່າຍ.

2. ສຳລັບວັດຖຸດິບທີ່ຈັດຊື້ໃນທ້ອງຖິ່ນ, ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໂດຍຜູ້ຜະລິດສຸດທ້າຍທີ່ສົ່ງອອກພາຍໃຕ້ສັນຍາສະບັບນີ້ ຈະຖືກນຳໃຊ້ເປັນພື້ນຖານໃນການກຳນົດສະຖານະພາບຂອງສິນຄ້າ.

## ລະບຽບ 5

### ການຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D)

1. ໃນເວລາດຳເນີນຂັ້ນຕອນທາງການໃນການສົ່ງອອກຜະລິດຕະພັນພາຍໃຕ້ສິດທິພິເສດທາງອັດຕາພາສີ, ຜູ້ສົ່ງອອກ ຫຼື ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດດ້ວຍຕົນເອງຕ້ອງຍື່ນໃບສະເໜີເປັນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ພ້ອມດ້ວຍເອກະສານເພີ່ມຕື່ມທີ່ເໝາະສົມ ເພື່ອພິສູດໃຫ້ຜະລິດຕະພັນທີ່ຈະສົ່ງອອກ ມີຄຸນສົມບັດສຳລັບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D).

2. CE ອາດໃຊ້ວິຈາລະຍານຂອງຕົນ, ຍື່ນຄຳຮ້ອງຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແທນການອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ.

## ລະບຽບ 6

### ການກວດກາຄຳຮ້ອງຂໍໃບຢັ້ງຢືນ ແຫຼ່ງກຳເນີດສິນຄ້າ (ແບບພິມ D)

ອົງການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າຕ້ອງພະຍາຍາມສຸດຄວາມສາມາດເພື່ອດຳເນີນການກວດກາທີ່ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກ, ໃນການຍື່ນຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ເພື່ອຮັບປະກັນວ່າ:

(a) ໃບຄຳຮ້ອງ ແລະ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແມ່ນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນເຊັນໂດຍຜູ້ມີສິດທີ່ໄດ້ຮັບອະນຸຍາດ;

(b) ແຫຼ່ງກຳເນີດຂອງສິນຄ້າແມ່ນສອດຄ່ອງກັບຂໍ້ກຳນົດຂອງ ໝວດ 3 ຂອງສັນຍາສະບັບນີ້;

(c) ຂໍ້ຄວາມອື່ນໆຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ກົງກັບເອກະສານຫຼັກຖານເພີ່ມຕື່ມ;

(d) ລາຍລະອຽດ, ປະລິມານ ແລະ ນ້ຳໜັກຂອງສິນຄ້າ, ເຄື່ອງໝາຍ ແລະ ຈຳນວນຫີບຫຸ້ມຫໍ່, ຈຳນວນ ແລະ ປະເພດຂອງຊຸດສິນຄ້າຕ່າງໆຕາມທີ່ໄດ້ກຳນົດໄວ້, ສອດຄ່ອງກັບຜະລິດຕະພັນທີ່ຈະສົ່ງອອກ;

(e) ຕ້ອງອະນຸຍາດແກ່ການແຈ້ງຫຼາຍລາຍການໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ສະບັບດຽວກັນ ຖ້າວ່າແຕ່ລະລາຍການລ້ວນແຕ່ມີເງື່ອນໄຂຄົບຖ້ວນຕາມສິດຂອງຕົນເອງ.

## ລະບຽບ 7

### ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D)

1. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຕ້ອງໃສ່ເຈ້ຍຂາວຂະໜາດ ISO A4 ໂດຍສອດຄ່ອງກັບຕົວຢ່າງທີ່ຢູ່ໃນເອກະສານຊ້ອນທ້າຍ 7 ຂອງສັນຍາສະບັບນີ້ ຊຶ່ງຈະຖືກສ້າງເປັນພາສາອັງກິດ.
2. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຈະປະກອບມີ ໜຶ່ງ (1) ຕົ້ນສະບັບ ແລະ ສອງ (2) ສະບັບສຳເນົາກາກບອນ (ສະບັບສຳເນົາທີ 2 ແລະ 3).
3. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແຕ່ລະສະບັບ ຕ້ອງມີຕົວເລກເອກະສານອ້າງອີງແຍກຕ່າງຫາກໂດຍແຕ່ລະສະຖານທີ່ ຫຼື ຫ້ອງການທີ່ອອກໃຫ້.
4. ໃບຢັ້ງຢືນແຫຼ່ງກຳເນີດແຕ່ລະໃບ (ແບບພິມ D) ຕ້ອງມີລາຍເຊັນຂອງຜູ້ມີສິດອຳນາດລົງລາຍເຊັນ ແລະ ກາປະທັບທາງການຂອງເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ. ແບບຢ່າງລາຍເຊັນ ແລະ ກາປະທັບດັ່ງກ່າວອາດຈະຖືກນຳໃຊ້ແບບເຈ້ຍສີ ຫຼື ແບບເລັກໂຕຣນິກ[4]
5. ເອກະສານຕົ້ນສະບັບ ຈະຖືກສົ່ງຕໍ່ໂດຍຜູ້ສົ່ງອອກໄປໃຫ້ຜູ້ນຳເຂົ້າ ເພື່ອຍື່ນຕໍ່ເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລັດ ຢູ່ທີ່ທ່າເຮືອ ຫຼື ສະຖານທີ່ນຳເຂົ້າ. ສະບັບສຳເນົາທີສອງແມ່ນເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃນປະເທດສະມາຊິກທີ່ສົ່ງອອກເປັນຜູ້ເກັບຮັກສາໄວ້. ສະບັບສຳເນົາທີສາມ ແມ່ນຜູ້ສົ່ງອອກເປັນຜູ້ເກັບຮັກສາໄວ້.

## ລະບຽບ 8

### ມາດຖານໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D)

ເພື່ອຈັດຕັ້ງປະຕິບັດຂໍ້ກຳນົດຂອງ ມາດຕາ 26 ຂອງສັນຍາສະບັບນີ້, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ທີ່ອອກໂດຍປະເທດສະມາຊິກສົ່ງອອກສຸດທ້າຍ ຕ້ອງກຳນົດມາດຖານທີ່ກ່ຽວຂ້ອງ.

[4] ລາຍເຊັນ ແລະ ຕາປະທັບທີ່ນຳໃຊ້ຜ່ານທາງອີເລັກໂຕຣນິກບໍ່ໝາຍເຖິງລາຍເຊັນແບບດິຈິຕອນ. ການຮັບເອົາລາຍເຊັນ ແລະ ປະທັບຕາຂອງປະເທດສະມາຊິກແມ່ນຂຶ້ນກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

## ລະບຽບ 9

### ການດັດແກ້ຄຳຜິດໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D)

ບໍ່ອະນຸຍາດໃຫ້ມີການລຶບ ຫຼື ການຂຽນທັບຊ້ອນຢູ່ໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D). ການປ່ຽນແປງໃດໜຶ່ງຈະເຮັດໄດ້ດັ່ງລຸ່ມນີ້:

(a) ຂີດຂ້າຂໍ້ຄວາມທີ່ຜິດອອກ ແລະ ທຳການເພີ່ມຕື່ມໃສ່ຕາມຄວາມຈຳເປັນ. ການປ່ຽນແປງດັ່ງກ່າວຕ້ອງໄດ້ຮັບການອະນຸມັດຈາກເຈົ້າໜ້າທີ່ ທີ່ໄດ້ຮັບອະນຸຍາດເຊັນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແລະ ໄດ້ຮັບການຢັ້ງຢືນຈາກອົງການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າ. ຊ່ອງຫວ່າງທີ່ບໍ່ໄດ້ໃຊ້ ຈະຕ້ອງຂີດຂ້າອອກ ເພື່ອປ້ອງກັນການຂຽນຕື່ມໃສ່ໃນພາຍຫຼັງ; ຫຼື

(b) ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ໃໝ່ເພື່ອທົດແທນໃບຢັ້ງຢືນທີ່ບໍ່ຖືກຕ້ອງ.

## ລະບຽບ 10

### ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D)

1. ຖ້າມີການຍື່ນທຸກເອກະສານທີ່ຕ້ອງການແລ້ວ, ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດສະມາຊິກທີ່ສົ່ງອອກ ຈະຕ້ອງອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ກ່ອນ ຫຼື ໃນເວລາຂົນສົ່ງ ຫຼື ບໍ່ດົນຫຼັງຈາກນັ້ນ ແຕ່ບໍ່ໃຫ້ເກີນສາມ (3) ວັນ ນັບຈາກວັນທີ່ໄດ້ແຈ້ງວ່າມີການຂົນສົ່ງແລ້ວ, ເມື່ອໃດກໍຕາມສິນຄ້າທີ່ສົ່ງອອກຖືກພິຈາລະນາວ່າ ມີແຫຼ່ງກຳເນີດ ມີຢູ່ໃນປະເທດສະມາຊິກນັ້ນ ຕາມທີ່ໃຫ້ຄວາມໝາຍໄວ້ໃນພາກທີ 3 ຂອງຂໍ້ຕົກລົງສະບັບນີ້.

2. ໃນກໍລະນີພິເສດທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຍັງບໍ່ທັນອອກໃຫ້ໃນເວລາສົ່ງອອກ ຫຼື ບໍ່ເກີນສາມ (3) ວັນນັບແຕ່ມື້ທີ່ໄດ້ແຈ້ງວ່າມີການຂົນສົ່ງແລ້ວ, ເນື່ອງຈາກ ຂໍ້ຜິດພາດທີ່ບໍ່ໄດ້ຕັ້ງໃຈ ຫຼື ການລະເວັ້ນ ຫຼື ສາເຫດທີ່ມີເຫດຜົນອື່ນໆ, ສາມາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຍ້ອນຫຼັງໄດ້ ແຕ່ບໍ່ໃຫ້ເກີນໜຶ່ງ (1) ປີ ນັບແຕ່ວັນທີ່ຂົນສົ່ງ ແລະ ຈະຕ້ອງລະບຸຢ່າງຖືກຕ້ອງ ແລະ ຊັດເຈນວ່າ "ອອກຍ້ອນຫຼັງ".

## ລະບຽບ 11

## ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ

1. ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດສະມາຊິກສົ່ງອອກທີ່ເປັນຄົນກາງອາດຈະອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແບບຕໍ່ເນື່ອງ ຖ້າຜູ້ສົ່ງອອກໄດ້ຍື່ນຄຳຮ້ອງມາຫາ, ຖ້າວ່າ:

   (a) ສະແດງຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບຕົ້ນທີ່ຖືກຕ້ອງ. ໃນກໍລະນີທີ່ບໍ່ມີການສະແດງຫຼັກຖານຕົ້ນສະບັບ, ຈະຕ້ອງຍື່ນສະບັບສຳເນົາທີ່ມີການຢັ້ງຢືນຢ່າງຖືກຕ້ອງ;

   (b) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແບບຕໍ່ເນື່ອງທີ່ອອກໃຫ້ຄວນໃຫ້ມີຂໍ້ມູນບາງຢ່າງຄືກັນກັບຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບຕົ້ນ. ໂດຍສະເພາະ, ທຸກໆຖັນໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແບບຕໍ່ເນື່ອງ ຄວນຕ້ອງຕື່ມໃຫ້ຄົບຖ້ວນ. ລາຄາ ຂອງປະເທດສະມາຊິກທີ່ເປັນຄົນກາງໃນຫ້ອງທີ 9 ກໍຄວນຈະຖືກສະທ້ອນໃຫ້ເຫັນໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (ແບບພິມ D) ແບບຕໍ່ເນື່ອງ;

   (c) ສຳລັບການສົ່ງສິນຄ້າອອກບາງສ່ວນ, ຈະຕ້ອງໄດ້ລະບຸມູນຄ່າການສົ່ງອອກບາງສ່ວນ ແທນມູນຄ່າເຕັມຂອງຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບຕົ້ນ. ປະເທດສະມາຊິກທີ່ເປັນຄົນກາງຈະຕ້ອງຮັບປະກັນວ່າປະລິມານສິນຄ້າທີ່ຖືກສົ່ງອອກຕໍ່ທັງໝົດ ພາຍໃຕ້ການສົ່ງອອກບາງສ່ວນ ແມ່ນບໍ່ເກີນປະລິມານທັງໝົດໃນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈາກປະເທດສະມາຊິກທຳອິດ ໃນເວລາອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແບບຕໍ່ເນື່ອງໃຫ້ແກ່ຜູ້ສົ່ງອອກ;

   (d) ຂັ້ນຕອນການກວດພິສູດຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂໍ້ 18 ແລະ ຂໍ້ 19 ກໍຍັງຈະນຳໃຊ້ກັບປະເທດສະມາຊິກ ທີ່ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງອີກດ້ວຍ;

   (e) ຂໍ້ມູນໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (ແບບພິມ D) ແບບຕໍ່ເນື່ອງປະກອບມີວັນທີອອກ ແລະ ໝາຍເລກອ້າງອີງ ຂອງຫຼັກຖານຢັ້ງຢືນ

ແຫຼ່ງກຳເນີດສິນຄ້າສະບັບຕົ້ນ. ມູນດັ່ງກ່າວຈະຕ້ອງລະບຸຢູ່ໃນຫ້ອງທີ 7 ຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ) ແບບຕໍ່ເນື່ອງ;

(f) CE ທີ່ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ ຈະຕ້ອງເປັນ CE ທີ່ໄດ້ຮັບອະນຸຍາດໃຫ້ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃຫ້ແກ່ສິນຄ້າປະເພດດຽວກັນໄດ້.

2. CE ສາມາດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບອອກຕໍ່ເນື່ອງຖ້າວ່າ:

(a) CE ດັ່ງກ່າວມີຫຼັກຖານຕົ້ນສະບັບ ທີ່ຖືກຕ້ອງຈາກປະເທດສະມາຊິກສົ່ງອອກແຫ່ງທຳອິດ. ໃນກໍລະນີທີ່ບໍ່ມີການພິສູດແຫຼ່ງກຳເນີດສິນຄ້າ, ຕ້ອງເອົາໃບຢັ້ງຢືນສະບັບແທ້ເພື່ອຢັ້ງຢືນ;

(b) ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງທີ່ອອກໃຫ້ ຄວນມີຂໍ້ມູນບາງຢ່າງຄືກັບການພິສູດແຫຼ່ງກຳເນີດສິນຄ້າ. ລາຄາ FOB ຂອງປະເທດສະມາຊິກຜູ້ສົ່ງອອກທຳອິດກໍຄວນຈະຖືກສະທ້ອນໃຫ້ເຫັນ ໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ;

(c) ສຳລັບການຂົນສົ່ງສິນຄ້າອອກບາງສ່ວນ, ມູນຄ່າການສົ່ງອອກບາງສ່ວນຈະຖືກສະແດງແທນມູນຄ່າເຕັມຂອງການພິສູດແຫຼ່ງກຳເນີດສິນຄ້າ. CE ອອກໃບແຈ້ງແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ ຈະຮັບປະກັນວ່າຈຳນວນສິນຄ້າທີ່ສົ່ງອອກຕໍ່ທັງໝົດທີ່ສົ່ງອອກພາຍໃຕ້ການຂົນສົ່ງບາງສ່ວນ ບໍ່ໃຫ້ເກີນຈຳນວນທັງໝົດຂອງຫຼັກຖານສະແດງແຫຼ່ງກຳເນີດ;

(d) ຂັ້ນຕອນການຢັ້ງຢືນຕາມທີ່ໄດ້ກຳນົດໄວ້ໃນລະບຽບ 18 ແລະ 19 ກໍຍັງຈະນຳໃຊ້ກັບປະເທດສະມາຊິກທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແຫຼ່ງກຳເນີດແບບຕໍ່ເນື່ອງອີກດ້ວຍ;

(e) ຂໍ້ມູນກ່ຽວກັບ ໃບແຈ້ງແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ ລວມມີວັນທີອອກ ແລະ ໝາຍເລກເອກະສານອ້າງອີງການພິສູດແຫຼ່ງກຳເນີດສິນຄ້າໃບຢັ້ງຢືນແຫຼ່ງກຳເນີດ;

(f) CE ທີ່ອອກໃບແຈ້ງແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງ ຄວນແມ່ນ CE ທີ່ໄດ້ຮັບສິດໃນການອອກໃບແຈ້ງແຫຼ່ງກຳເນີດສິນຄ້າສຳລັບສິນຄ້າດຽວກັນ.

## ລະບຽບ 12

### ການສູນເສຍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D)

ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຖືກລັກ, ເສຍຫາຍ ຫຼື ຖືກທຳລາຍ, ຜູ້ສົ່ງອອກສາມາດຍື່ນຄຳຮ້ອງ ເປັນລາຍລັກອັກສອນເຖິງເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ເພື່ອຂໍໃຫ້ຢັ້ງຢືນຄວາມຖືກຕ້ອງແກ່ສະບັບສຳເນົາຂອງໃບຢັ້ງຢືນສະບັບຕົ້ນ ແລະ ສຳເນົາສະບັບທີສາມ (triplicate) ເພື່ອໃຊ້ເປັນພື້ນຖານແກ່ ເອກະສານການສົ່ງອອກໄວ້ໃນການຄອບຄອງຂອງພວກເຂົາ ຊຶ່ງຕ້ອງມີຄຳເວົ້າຮັບຮອງວ່າ "ຢັ້ງຢືນວ່າເປັນສຳເນົາຖືກຕ້ອງ (CERTIFIED TRUE COPY)" ໃສ່ໃນຫ້ອງທີ 12. ສຳເນົານີ້ຕ້ອງມີວັນທີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ສະບັບຕົ້ນ. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ທີ່ໄດ້ຮັບການຢັ້ງຢືນວ່າເປັນສຳເນົາຖືກຕ້ອງຈະຕ້ອງອອກບໍ່ໃຫ້ກາຍໜຶ່ງ (1) ປີ ນັບແຕ່ມື້ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ສະບັບຕົ້ນ.

## ລະບຽບ 12 A

### ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

1. ເຈົ້າໜ້າທີ່ທີ່ມີສິດອຳນາດຂອງປະເທດສະມາຊິກທີ່ສົ່ງອອກ ອາດຈະອະນຸຍາດໃຫ້ຜູ້ສົ່ງອອກສິນຄ້າທີ່ຈັດສົ່ງສິນຄ້າພາຍໃຕ້ຂໍ້ຕົກລົງນີ້ ຕໍ່ໄປນີ້ເອີ້ນວ່າ 'ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ' ເພື່ອອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ທີ່ກ່ຽວກັບສະຖານະແຫຼ່ງກຳເນີດຂອງສິນຄ້າທີ່ກ່ຽວຂ້ອງ. ຜູ້ສົ່ງອອກທີ່ຕ້ອງການການອະນຸຍາດດັ່ງກ່າວ ຕ້ອງຍື່ນຄຳຮ້ອງເປັນລາຍລັກອັກສອນ ຫຼື ໂດຍທາງອີເລັກໂຕຣນິກ ແລະ ຕໍ່ເຈົ້າໜ້າທີ່ທີ່ມີສິດໃຫ້ໄດ້ຕາມການຮັບຮອງທີ່ຈຳເປັນທັງໝົດ ເພື່ອພິສູດສະຖານະແຫຼ່ງກຳເນີດຂອງສິນຄ້າ ທີ່ໄດ້ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແລ້ວ.

2. ອົງການຈັດຕັ້ງທີ່ມີສິດອຳນາດສາມາດອະນຸຍາດໃຫ້ສະຖານະພາບຂອງ CE ຕາມເງື່ອນໄຂທີ່ຕົນເອງເຫັນວ່າເໝາະສົມ, ລວມທັງໃນກໍລະນີໃດໜຶ່ງດັ່ງຕໍ່ໄປນີ້:

   (a) ຜູ້ສົ່ງອອກໄດ້ຈົດທະບຽນຖືກຕ້ອງຕາມລະບຽບ ແລະ ກົດໝາຍຂອງປະເທດສະມາຊິກສົ່ງອອກ;

   (b) ຜູ້ສົ່ງອອກຕ້ອງປະຕິບັດ ເພື່ອຮັບປະກັນໃຫ້ຜູ້ລົງລາຍເຊັນທີ່ໄດ້ຮັບອະນຸຍາດຮັບຜິດຊອບໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ, ໃນການປະຕິບັດ, ຮັບຮູ້ ແລະ ເຂົ້າໃຈລະບຽບຂອງແຫຼ່ງກຳເນີດທີ່ໄດ້ກຳນົດໄວ້ໃນສັນຍາ;

   (c) ຜູ້ສົ່ງອອກຄວນມີປະສົບການໃນລະດັບທີ່ໜ້າພໍໃຈໃນການສົ່ງອອກໂດຍອີງຕາມກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກສົ່ງອອກ;

   (d) ຜູ້ສົ່ງອອກຕ້ອງບໍ່ມີປະຫວັດກ່ຽວກັບການປອມແປງລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າໃດໆ ໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ;

   (e) ຜູ້ສົ່ງອອກຕ້ອງມີການປະຕິບັດທີ່ດີ ຊຶ່ງວັດແທກໄດ້ໂດຍອົງການການຄຸ້ມຄອງບໍລິຫານຄວາມສ່ຽງ ທີ່ມີສິດອຳນາດຂອງປະເທດສະມາຊິກທີ່ສົ່ງອອກ;

   (f) ຜູ້ສົ່ງອອກ, ໃນກໍລະນີຂອງພໍ່ຄ້າ, ຕ້ອງມີ “ການແຈ້ງຂອງຜູ້ຜະລິດ” ທີ່ຊີ້ບອກເຖິງແຫຼ່ງກຳເນີດຂອງຜະລິດຕະພັນທີ່ຕ້ອງມີການຢັ້ງຢືນດ້ວຍຕົນເອງ ແລະ ຄວາມພ້ອມຂອງຜູ້ຜະລິດທີ່ຈະຮ່ວມມືໃນການກວດກາ ແລະ ກວດສອບການກວດສອບຢ້ອນຫຼັງໃໝ່ຖ້າມີຄວາມຕ້ອງການ ; ແລະ

   (g) ຜູ້ສົ່ງອອກຕ້ອງມີລະບົບການບັນທຶກທີ່ດີ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກສົ່ງອອກ.

3. ການມອບສິດຕ້ອງໄດ້ຮັບການມອບຢ່າງເປັນລາຍລັກອັກສອນ. ເຈົ້າໜ້າທີ່ທີ່ມີສິດອຳນາດຈະມອບລະຫັດການອະນຸຍາດ ຊຶ່ງຕ້ອງໄດ້ລວມເຂົ້າໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ. ປະເທດສະມາຊິກຕ້ອງລວມເອົາຂໍ້ມູນ ກ່ຽວກັບ ການອະນຸຍາດທີ່ໄດ້ຮັບໃນຖານຂໍ້ມູນການຢັ້ງຢືນດ້ວຍຕົນເອງຂອງອາຊຽນ, ໂດຍສອດ ຄ່ອງກັບລະບຽບ 2 (4).

4. CE ຕ້ອງມີພັນທະດັ່ງຕໍ່ໄປນີ້:

(a) ອະນຸຍາດໃຫ້ເຈົ້າໜ້າທີ່ທີ່ມີສິດອຳນາດເຂົ້າເຖິງບັນທຶກ ແລະ ສະຖານທີ່ການຜະລິດຂອງຕົນ ເພື່ອຈຸດປະສົງໃນການຕິດຕາມກວດກາການນຳໃຊ້ການອະນຸຍາດ ແລະ ການກວດສອບຄວາມຖືກຕ້ອງຂອງການແຈ້ງ. ບັນທຶກ ແລະ ບັນຊີຕ້ອງອະນຸຍາດໃຫ້ມີການກຳນົດ ແລະ ຢັ້ງຢືນສະຖານະພາບສິນຄ້າທີ່ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ, ໃນເວລາຢ່າງໜ້ອຍສາມ (3) ປີ ນັບແຕ່ມື້ອອກແຈ້ງການຮັບຮອງ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກສົ່ງອອກ;

(b) ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າພຽງແຕ່ ສຳລັບສິນຄ້າທີ່ໄດ້ຮັບອະນຸຍາດໃຫ້ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ແລະ ສຳລັບມາດຕະການດັ່ງກ່າວ, CE ມີເອກະສານທີ່ເໝາະສົມທັງໝົດພິສູດສະຖານະພາບສິນຄ້າທີ່ກ່ຽວຂ້ອງໃນເວລາແຈ້ງອອກໃບຮັບຮອງດັ່ງກ່າວ;

(c) ສືບຕໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງລະບຽບນີ້;

(d) ຮ່ວມມືໃນການກວດກາແບບເຄື່ອນໄຫວ ແລະ ການກວດພິສູດ;

(e) ຍອມຮັບຄວາມຮັບຜິດຊອບທັງໝົດສຳລັບການອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ, ລວມທັງການນຳໃຊ້ທີ່ບໍ່ຖືກຕ້ອງ; ແລະ

(f) ແຈ້ງໃຫ້ເຈົ້າໜ້າທີ່ຊາບທັນທີ ກ່ຽວກັບ ການປ່ຽນແປງໃດໆທີ່ກ່ຽວຂ້ອງກັບຂໍ້ມູນທີ່ຍື່ນໄປແລ້ວພາຍໃຕ້ລະບຽບ 2(4) ຂອງເອກະສານຊ້ອນທ້າຍນີ້.

## ລະບຽບ 12 B

### ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ

1. ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າຕ້ອງກຳນົດຂໍ້ມູນທີ່ລະບຸໄວ້ໃນເອກະສານຄັດຕິດ 1 ຂອງເອກະສານຊ້ອນທ້າຍນີ້.

## ເອກະສານຄັດຕິດ 1
## ລາຍການຂໍ້ມູນທີ່ຕ້ອງການ

| | |
|---|---|
| 1. ລາຍລະອຽດຂອງ CE | ລະຫັດ CE ທີ່ຖືກມອບສິດ. |
| 2. ລາຍລະອຽດຂອງສິນຄ້າ | (i) ຊື່ຂອງຜະລິດຕະພັນ;<br>(ii) HS ໃນລະດັບຫົກຕົວເລກ ຫຼື ລະຫັດ AHTN;<br>(iii) ເງື່ອນໄຂການກຳນົດແຫຼ່ງກຳເນີດ;<br>(iv) ປະເທດແຫຼ່ງກຳເນີດ;<br>(v) ລາຄາ FOB ເມື່ອນຳໃຊ້ມາດຖານການສະສົມມູນຄ່າໃນພາກພື້ນ;<br>(vi) ປະລິມານສິນຄ້າ;<br>(vii) ເຄື່ອງໝາຍການຄ້າ, ຖ້າມີ; ແລະ<br>(viii) ສຳລັບກໍລະນີຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃບຢັ້ງຢືນແຫຼ່ງກຳເນີດຂອງຈຳນວນເອກະສານອ້າງອີງແຫຼ່ງກຳເນີດ, ວັນທີອອກຢັ້ງຢືນ, ປະເທດແຫຼ່ງກຳເນີດຂອງປະເທດສົ່ງອອກທຳອິດ ແລະ ຖ້າເປັນໄປໄດ້, ລະຫັດ CE ທີ່ຖືກມອບສິດຂອງປະເທດສົ່ງອອກທຳອິດ. |
| 3. ການຢັ້ງຢືນໂດຍຜູ້ລົງລາຍເຊັນທີ່ໄດ້ຖືກມອບສິດ[5] | (i) ການຢັ້ງຢືນໂດຍຜູ້ລົງລາຍເຊັນທີ່ໄດ້ຮັບອະນຸຍາດຂອງ CE ວ່າສິນຄ້າທີ່ລະບຸໄວ້ໃນໃບແຈ້ງແຫຼ່ງກຳເນີດສິນຄ້າແມ່ນຖືກຕ້ອງກັບທຸກໆຂໍ້ກຳນົດທີ່ກ່ຽວຂ້ອງ ຂອງ ໝວດ 3 ຂອງສັນຍາສະບັບນີ້ໂດຍອີງໃສ່ຫຼັກຖານທີ່ໄດ້ສະໜອງ.<br>(ii) ລາຍເຊັນທີ່ໄດ້ຮັບອະນຸຍາດໃສ່ຊື່ແຈ້ງ/ປະທັບກາຂອງຜູ້ລົງລາຍເຊັນ. |

2. ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ຄວນຈະອອກໃນໃບແຈ້ງລາຄາ. ເຖິງຢ່າງໃດກໍຕາມ, ຖ້າບໍ່ສາມາດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າໃນໃບແຈ້ງລາຄາໃນເວລາທີ່ສົ່ງອອກ, ຊຶ່ງອາດຈະຂຽນໃນເອກະສານການຄ້າໃດໜຶ່ງຕໍ່ໄປນີ້: ໃບເກັບເງິນ, ໃບສັ່ງຊື້ສິນຄ້າ ຫຼື ໃບຫຸ້ມຫໍ່ສິນຄ້າ ແລະ ຈະຖືກຍອມຮັບໃນເວລາທີ່ນຳເຂົ້າພ້ອມກັບໃບແຈ້ງລາຄາ.

[5] ຄວາມຈຳເປັນໃນການຮັກສາຂໍ້ກຳນົດນີ້ ແມ່ນຕ້ອງໄດ້ທົບທວນຄືນພາຍຫຼັງ 2 ປີ ນັບແຕ່ວັນຈັດຕັ້ງປະຕິບັດໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ.

3. ເອກະສານທີ່ປະກອບດ້ວຍໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ຄວນອະທິບາຍສິນຄ້າໃນລາຍລະອຽດທີ່ພຽງພໍເພື່ອຊ່ວຍໃຫ້ຕົນເອງສາມາດລະບຸໄດ້ ໃນຈຸດປະສົງກຳນົດແຫຼ່ງກຳເນີດສິນຄ້າ.

4. ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າຕ້ອງມີຊື່ ແລະ ລາຍເຊັນຂອງຜູ້ລົງລາຍເຊັນທີ່ໄດ້ຮັບອະນຸຍາດ.

5. ວັນທີຂອງເອກະສານ ທີ່ປະກອບດ້ວຍໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ຈະຖືກພິຈາລະນາເປັນວັນທີ່ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ.

6. ຕົວເລກເອກະສານອ້າງອີງຂອງເອກະສານ ທີ່ປະກອບດ້ວຍໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າຈະຖືກພິຈາລະນາເປັນຕົວເລກອ້າງອີງຂອງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ.

7. ຖ້າໃນກໍລະນີທີ່ຊ່ອງຫວ່າງທີ່ຈັ່ງໄວ້ໃນໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ບໍ່ພຽງພໍທີ່ຈະໃສ່ລາຍຊື່ຜະລິດຕະພັນທັງໝົດ, ສາມາດເພີ່ມໜ້າເຈ້ຍທີ່ມີຂໍ້ມູນຕາມທີ່ກຳນົດໄວ້ໃນເອກະສານຄັດຕິດ 1 ໃສ່ໄດ້.

## ລະບຽບ 12 C

### ການຕິດຕາມກວດກາ ແລະ ກວດຢັ້ງຢືນ

ເຈົ້າໜ້າທີ່ທີ່ມີສິດອຳນາດໃນການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະຕິດຕາມກວດກາການນຳໃຊ້ທີ່ຖືກຕ້ອງຂອງການອະນຸຍາດ, ລວມທັງການກວດສອບຄວາມຖືກຕ້ອງ ຂອງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ. ການຕັດສິນໃຈ ກ່ຽວກັບ ຄວາມຖີ່ ແລະ ຄວາມລະອຽດຂອງການກວດກາດັ່ງກ່າວຄວນອີງໃສ່ຄວາມສ່ຽງ. ຍິ່ງໄປກວ່ານັ້ນ, ເຈົ້າໜ້າທີ່ທີ່ມີສິດອຳນາດໃນການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າຈະປະຕິບັດຄຳຮ້ອງຂໍການພິສູດຢ້ອນຫຼັງ ໂດຍເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າ, ໂດຍສອດຄ່ອງກັບລະບຽບ 18.

## ລະບຽບ 12 D

### ການຖອນສິດ

ເຈົ້າໜ້າທີ່ທີ່ມີສິດອຳນາດສາມາດຖອນສິດໄດ້ທຸກເວລາ. ຊຶ່ງຈະຕ້ອງໄດ້ປະຕິບັດຕາມນັ້ນໃນກໍລະນີທີ່ CE ບໍ່ສາມາດໃຫ້ການຮັບປະກັນ ຕາມທີ່ກຳນົດໄວ້ໃນກົດລະບຽບຂໍ້ 12A (1) ອີກຕໍ່ໄປ, ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດລະບຽບຂໍ້ 12A (2) ອີກຕໍ່ໄປ ຫຼື ນຳໃຊ້ສິດໄປໃນທາງທີ່ຜິດເປັນຢ່າງອື່ນ. ປະເທດສະມາຊິກຈະຕ້ອງປ້ອນຂໍ້ມູນ ກ່ຽວກັບ ການຖອນສິດເຂົ້າໃນຖານຂໍ້ມູນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນໃນທັນທີໂດຍປະຕິບັດຕາມກົດລະບຽບຂໍ້ 2.

## ລະບຽບ 13

### ການຍື່ນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ

1. ສຳລັບຈຸດປະສົງໃນການຮຽກຮ້ອງເອົາສິດທິພິເສດດ້ານພາສີ, ຜູ້ນຳເຂົ້າຕ້ອງຍື່ນຕໍ່ເຈົ້າໜ້າທີ່ພາສີ ຫຼື ອົງການທີ່ກ່ຽວຂ້ອງຂອງລັດຖະບານ ຂອງປະເທດສະມາຊິກທີ່ນຳເຂົ້າໃນເວລາທີ່ນຳເຂົ້າ:

   (a) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ລວມທັງເອກະສານເພີ່ມຕື່ມຕື່ມ; ຫຼື

   (b) ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທີ່ອອກໂດຍ CE ເປັນຕົ້ນແມ່ນເອກະສານເພີ່ມຕື່ມຕື່ມ.

2. ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຖືກປະຕິເສດຈາກເຈົ້າໜ້າທີ່ພາສີ ຫຼື ອົງການທີ່ກ່ຽວຂ້ອງຂອງລັດຖະບານຂອງປະເທດສະມາຊິກທີ່ນຳເຂົ້າ, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ທີ່ມີບັນຫາດັ່ງກ່າວຈະຖືກໝາຍຕາມນັ້ນໃນຫ້ອງທີ 4 ແລະ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຈະຖືກສົ່ງກັບຄືນໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດັ່ງກ່າວ ພາຍໃນໄລຍະເວລາທີ່ເໝາະສົມແຕ່ບໍ່ເກີນຫົກສິບ (60) ວັນ. ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະໄດ້ຮັບແຈ້ງການຢ່າງຖືກຕ້ອງເຖິງສາເຫດທີ່ຖືກປະຕິເສດຈາກການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີ.

3. ໃນກໍລະນີທີ່ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ຖືກປະຕິເສດຈາກເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າ, ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທີ່ມີບັນຫາດັ່ງກ່າວ ຈະຖືກສົ່ງກັບຄືນໃຫ້ເຈົ້າໜ້າທີ່ທີ່ມີສິດອຳນາດພາຍໃນໄລຍະເວລາທີ່ເໝາະສົມແຕ່ບໍ່ເກີນຫົກສິບ (60) ວັນ. ເຈົ້າໜ້າທີ່ທີ່ມີສິດຈະໄດ້ຮັບແຈ້ງການຢ່າງຖືກຕ້ອງເຖິງສາເຫດທີ່ຖືກປະຕິເສດຈາກການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີ.

4. ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຖືກປະຕິເສດ, ດັ່ງທີ່ໄດ້ກຳນົດໄວ້ໃນວັກ 2 ແລະ 3 ກ່ອນໜ້າຂອງກົດລະບຽບສະບັບນີ້, ປະເທດສະມາຊິກທີ່ນຳເຂົ້າຄວນຍອມຮັບ ແລະ ພິຈາລະນາການຊີ້ແຈງຈາກເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ເຈົ້າໜ້າທີ່ທີ່ມີສິດອຳນາດ ແລະ ປະເມີນອີກຄັ້ງວ່າ ໃບຢັ້ງຢືນແຫຼ່ງກຳເນີດສາມາດຍອມຮັບໄດ້ ສຳລັບການອະນຸຍາດໃຫ້ປະຕິບັດສິດທິພິເສດທາງດ້ານອັດຕາພາສີ ຫຼື ບໍ່. ການຊີ້ແຈງດັ່ງກ່າວຄວນໃຫ້ການແກ້ໄຂສາເຫດຂອງການປະຕິເສດ ການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີທີ່ປະເທດສະມາຊິກທີ່ນຳເຂົ້າໄດ້ຍົກຂຶ້ນມາໃຫ້ລະອຽດ ແລະ ຄົບຖ້ວນ.

## ລະບຽບ 14

### ອາຍຸຂອງຫຼັກຖານການຢັ້ງຢືນແຫຼ່ງກຳເນີດສິນຄ້າ

ອາຍຸຂອງຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າມີດັ່ງລຸ່ມນີ້:

(a) ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະມີຜົນບັງຄັບໃຊ້ໃນໄລຍະເວລາສິບສອງ (12) ເດືອນ ສຳລັບຈຸດປະສົງການຢັ້ງຢືນແຫຼ່ງກຳເນີດ, ນັບແຕ່ມື້ອອກ ຫຼື ໃນກໍລະນີອອກໃບແຈ້ງລາຍລະອຽດສິນຄ້າໄດ້ແຫຼ່ງກຳເນີດ, ການອອກຢັ້ງຢືນ ແລະ ຕ້ອງສົ່ງໃຫ້ເຈົ້າໜ້າທີ່ພາສີຂອງປະເທດຜູ້ນຳເຂົ້າທີ່ເປັນສະມາຊິກພາຍໃນໄລຍະເວລາກຳນົດໄວ້.

(b) ເມື່ອມີການຍື່ນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າຕໍ່ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າ ຫຼັງຈາກທີ່ໝົດກຳນົດເວລາສຳລັບການຍື່ນແລ້ວ, ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບດັ່ງກ່າວ ແມ່ນຍັງຈະໄດ້ຮັບການຍອມຮັບ ຖ້າການບໍ່ປະຕິບັດຕາມກຳນົດເວລາດັ່ງກ່າວ ແມ່ນຍ້ອນເຫດສຸດວິໄສ ຫຼື ສາເຫດອື່ນໆທີ່ມີເຫດຜົນພຽງພໍທີ່ຢູ່ນອກເໜືອຈາກການຄວບຄຸມຂອງຜູ້ສົ່ງອອກ ແລະ

(c) ໃນກໍລະນີທີ່ມີການຍື່ນຊ້າອື່ນໆ, ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າອາດຈະຍອມຮັບຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບດັ່ງກ່າວໄດ້ ຖ້າຫາກວ່າສິນຄ້າໄດ້ຖືກນຳເຂົ້າກ່ອນໝົດກຳນົດເວລາແລ້ວ.

## ລະບຽບ 15
### ການຍົກເວັ້ນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ

ໃນກໍລະນີການຈັດສົ່ງສິນຄ້າທີ່ມີແຫຼ່ງກຳເນີດ ມາຈາກປະເທດສະມາຊິກສົ່ງອອກ ແລະ ມີມູນຄ່າ ບໍ່ເກີນ 200.00 (ສອງຮ້ອຍ) ໂດລາສະຫະລັດ, ການສະແດງຫຼັກຖານການຜະລິດສິນຄ້າຈະຖືກຍົກເວັ້ນ ແລະ ການນຳໃຊ້ການແຈ້ງແບບງ່າຍດາຍໂດຍຜູ້ສົ່ງອອກ ວ່າສິນຄ້າມີແຫຼ່ງກຳເນີດມາຈາກການສົ່ງອອກ ຊຶ່ງປະເທດສະມາຊິກຈະຖືກຍອມຮັບ. ສິນຄ້າທີ່ສົ່ງຜ່ານທາງໄປສະນີທີ່ມີລາຄາ ບໍ່ເກີນ 200.00 (ສອງຮ້ອຍ) ໂດລາສະຫະລັດ ກໍຈະຖືກປະຕິບັດຄ້າຍຄືກັນ.

## ລະບຽບ 16
### ການປະຕິບັດກັບຄວາມແຕກຕ່າງເລັກໜ້ອຍ

1. ໃນກໍລະນີທີ່ບໍ່ມີຂໍ້ສົງໄສກ່ຽວກັບແຫຼ່ງກຳເນີດຂອງສິນຄ້າໃນອາຊຽນ, ການພົບເຫັນມີຄວາມແຕກຕ່າງເລັກນ້ອຍ ເຊັ່ນ: ການພິມຜິດ ໃນຂໍ້ຄວາມທີ່ພິມໃສ່ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ສິ່ງທີ່ພິມຜິດໃນເອກະສານທີ່ຍື່ນຕໍ່ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າ ເພື່ອຈຸດປະສົງໃນການດຳເນີນພິທີການນຳເຂົ້າສິນຄ້າ ຈະບໍ່ເຮັດໃຫ້ເອກະສານດັ່ງກ່າວເປັນໂມຄະໂດຍສິ້ນເຊີງ ຖ້າໄດ້ຮັບການຮັບຮອງຢ່າງຖືກຕ້ອງວ່າເອກະສານດັ່ງກ່າວນັ້ນມີຄວາມສອດຄ່ອງກັບສິນຄ້າທີ່ສົ່ງມາ.

2. ໃນກໍລະນີທີ່ປະເທດສະມາຊິກທີ່ສົ່ງອອກ ແລະ ປະເທດສະມາຊິກທີ່ນຳເຂົ້າ ມີການຈັດແບ່ງປະເພດອັດຕາພາສີທີ່ແຕກຕ່າງກັນ ສຳລັບສິນຄ້າທີ່ຢາກຈະຂໍສິດທິພິເສດທາງດ້ານອັດຕາພາສີ, ສິນຄ້າດັ່ງກ່າວຈະຕ້ອງປ່ອຍອອກໃນອັດຕາພາສີຂອງ MFN ຫຼື ໃນສິດທິພິເສດທາງດ້ານອັດຕາພາສີທີ່ສູງກວ່າ, ໂດຍຂຶ້ນຢູ່ກັບການປະຕິບັດຕາມ ROO ທີ່ກ່ຽວຂ້ອງ ແລະ ບໍ່ມີການຮຽກຄ່າປັບໃໝ ຫຼື ຄ່າທຳນຽມອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງປະເທດສະມາຊິກທີ່ນຳເຂົ້າ. ເມື່ອຄວາມແຕກຕ່າງດ້ານ

ການຈັດແບ່ງປະເພດໄດ້ຮັບການແກ້ໄຂແລ້ວ, ອັດຕາພາສີທີ່ຖືກຕ້ອງຈະຖືກນຳໃຊ້ ແລະ ຄ່າທຳນຽມທີ່ຈ່າຍເກີນຈະຖືກສົ່ງຄືນ ຖ້າມີ, ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງປະເທດສະມາຊິກທີ່ນຳເຂົ້າ, ທັນທີທີ່ບັນຫາດັ່ງກ່າວໄດ້ຮັບການແກ້ໄຂແລ້ວ.

3. ສຳລັບກໍລະນີ ການແຈ້ງ ຫຼາຍລາຍການສິນຄ້າທີ່ລະບຸໄວ້ໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບດຽວກັນ, ບັນຫາທີ່ເກີດກັບໜຶ່ງໃນບັນດາລາຍການສິນຄ້າທີ່ລະບຸໄວ້ຈະບໍ່ມີຜົນກະທົບ ຫຼື ເຮັດໃຫ້ຊັກຊ້າໃນການອະນຸຍາດໃຫ້ປະຕິບັດສິດທິພິເສດທາງດ້ານອັດຕາພາສີ ແລະ ການແຈ້ງຜ່ານພາສີຂອງລາຍການທີ່ຍັງເຫຼືອ ທີ່ລະບຸໄວ້ໃນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບດັ່ງກ່າວ. ອາດຈະນຳໃຊ້ກົດລະບຽບຂໍ້ 18(c) ກັບບັນດາລາຍການທີ່ມີບັນຫາດັ່ງກ່າວ.

## ລະບຽບ 17
### ຂໍ້ກຳນົດໃນການເກັບຮັກສາຂໍ້ມູນ

1. ເພື່ອຈຸດປະສົງຂອງຂະບວນການການກວດພິສູດຕາມກົດລະບຽບຂໍ້ 18 ແລະ ຂໍ້ 19, ຜູ້ຜະລິດ ແລະ/ຫຼື ຜູ້ສົ່ງອອກ ທີ່ຍື່ນຄຳຮ້ອງອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແລະ CE ທີ່ອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ຈະຕ້ອງເກັບຮັກສາຂໍ້ມູນເພີ່ມຕື່ມຂອງຕົນ ທີ່ກ່ຽວຂ້ອງກັບຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າບໍ່ໃຫ້ເກີນສາມ (3) ປີ ນັບແຕ່ວັນທີ່ອອກຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າເປັນຕົ້ນໄປ ໂດຍຂຶ້ນກັບກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ສົ່ງອອກ.

2. ໃບຄຳຮ້ອງຍື່ນຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແລະ ເອກະສານທັງໝົດທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວຈະຕ້ອງຖືກເກັບຮັກສາໄວ້ໂດຍເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າບໍ່ໃຫ້ເກີນສາມ (3) ປີ ນັບແຕ່ມື້ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D).

3. ໃບຄຳຮ້ອງຍື່ນຂໍເປັນ CE ແລະ ເອກະສານທັງໝົດທີ່ກ່ຽວຂ້ອງກັບບຄຳຮ້ອງດັ່ງກ່າວ ຈະຕ້ອງຖືກເກັບຮັກສາໄວ້ໂດຍເຈົ້າໜ້າທີ່ທີ່ມີສິດອຳນາດບໍ່ໃຫ້ເກີນສາມ (3) ປີ ນັບແຕ່ວັນໝົດອາຍຸ ຫຼື ຖອນການອະນຸຍາດ.

4. ຂໍ້ມູນທີ່ກ່ຽວຂ້ອງກັບຄວາມຖືກຕ້ອງຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແລະ ຄວາມຖືກຕ້ອງຂອງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ຈະຕ້ອງໄດ້ສະໜອງໃຫ້ຕາມການຮ້ອງຂໍຂອງປະເທດສະມາຊິກທີ່ນຳເຂົ້າ ໂດຍເຈົ້າໜ້າທີ່ທີ່ມີສິດເຊັນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ແລະ ໄດ້ຮັບການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງຂອງລັດຖະບານ ຫຼື ເຈົ້າໜ້າທີ່ທີ່ມີສິດອຳນາດຂອງປະເທດສະມາຊິກທີ່ສົ່ງອອກຕາມລຳດັບ.

5. ທຸກຂໍ້ມູນທີ່ໃຊ້ໃນການຕິດຕໍ່ສື່ສານ ລະຫວ່າງປະເທດສະມາຊິກທີ່ກ່ຽວຂ້ອງຈະຕ້ອງເກັບຮັກສາເປັນຄວາມລັບ ແລະ ຈະຕ້ອງນຳໃຊ້ເພື່ອຈຸດປະສົງໃນການຢັ້ງຢືນຄວາມຖືກຕ້ອງຂອງຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າເທົ່ານັ້ນ.

## ລະບຽບ 18

### ການກວດສອບຍ້ອນຫຼັງ

ປະເທດສະມາຊິກທີ່ນຳເຂົ້າສາມາດຮຽກຮ້ອງໃຫ້ເຈົ້າໜ້າທີ່ອອກຢັ້ງຢືນ ຫຼື ອົງການທີ່ມີສິດອຳນາດຂອງປະເທດສະມາຊິກສົ່ງອອກ ດຳເນີນການກວດກາແບບຍ້ອນຫຼັງແບບສຸ່ມກວດ ແລະ/ຫຼື ເມື່ອມີຂໍ້ສົງໄສທີ່ສົມເຫດສົມຜົນ ກ່ຽວກັບ ຄວາມຖືກຕ້ອງຂອງເອກະສານ ຫຼື ຄວາມຖືກຕ້ອງຂອງຂໍ້ມູນ ກ່ຽວກັບ ຄວາມຈິງຂອງແຫຼ່ງກຳເນີດຂອງສິນຄ້າໂດຍເປັນຄຳຖາມ ຫຼື ບາງສ່ວນຂອງສິນຄ້າດັ່ງກ່າວ. ພາຍຫຼັງການຮ້ອງຂໍດັ່ງກ່າວ, ເຈົ້າໜ້າທີ່ອອກຢັ້ງຢືນ ຫຼື ອົງການທີ່ມີສິດອຳນາດຂອງປະເທດສະມາຊິກສົ່ງອອກຕ້ອງດຳເນີນການກວດສອບຍ້ອນຫຼັງ ກ່ຽວກັບໃບລາຍງານຄ່າໃຊ້ຈ່າຍຂອງຜູ້ຜະລິດ/ຜູ້ສົ່ງອອກໂດຍອີງໃສ່ຕົ້ນທຶນ ແລະ ລາຄາໃນປະຈຸບັນ, ພາຍໃນກຳນົດເວລາຫົກ (6) ເດືອນ, ທີ່ກຳນົດໃນວັນທີ່ສົ່ງອອກ ຂຶ້ນກັບເງື່ອນໄຂດັ່ງຕໍ່ໄປນີ້:

(a) ການຮ້ອງຂໍໃຫ້ມີການກວດກາຍ້ອນຫຼັງຈະຕ້ອງປະກອບດ້ວຍຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ກ່ຽວຂ້ອງ ແລະ ຈະຕ້ອງລະບຸເຫດຜົນ ແລະ ຂໍ້ມູນເພີ່ມຕື່ມທີ່ຊີ້ໃຫ້ເຫັນວ່າລາຍການທີ່ກ່າວເຖິງໃນຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າອາດຈະບໍ່ຖືກຕ້ອງ, ເວັ້ນເສຍແຕ່ວ່າການກວດສອບຍ້ອນຫຼັງດັ່ງກ່າວແມ່ນເປັນການສຸ່ມເອົາ;

(b) ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ເຈົ້າໜ້າທີ່ທີ່ມີສິດທີ່ໄດ້ຮັບການຮ້ອງຂໍການກວດກາຍ້ອນຫຼັງຈະຕ້ອງໃຫ້ການຕອບສະໜອງຕໍ່ຄຳຮ້ອງດັ່ງກ່າວໂດຍໄວ ແລະ ຕອບກັບພາຍໃນເກົ້າ ເກົ້າສິບ (90) ວັນ ຫຼັງຈາກໄດ້ຮັບຄຳຮ້ອງ;

(c) ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນໍາເຂົ້າອາດຈະໂຈະຂໍ້ກໍານົດ ກ່ຽວກັບ ສິດທິພິເສດໃນຂະນະທີ່ລໍຖ້າຜົນຂອງການກວດສອບ. ເຖິງຢ່າງໃດກໍຕາມ, ຊຶ່ງອາດຈະປ່ອຍສິນຄ້າອອກສູ່ຫົວຂໍ້ຜູ້ນໍາເຂົ້າມາດຕະການບໍລິຫານໃດໆທີ່ຖືວ່າມີຄວາມຈໍາເປັນ, ສະເໜີວ່າຕົນເອງບໍ່ໄດ້ຖືວ່າເປັນຫົວຂໍ້ຫ້າມນໍາເຂົ້າ ຫຼື ຈໍາກັດ ແລະ ບໍ່ມີຂໍ້ສົງໃສໃນການປອມແປງ; ແລະ

(d) ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຫຼື ເຈົ້າໜ້າທີ່ທີ່ມີສິດ ຈະຕ້ອງສົ່ງຜົນຂອງຂະບວນການກວດພິສູດໄປໃຫ້ປະເທດສະມາຊິກທີ່ນໍາເຂົ້າໂດຍໄວ ຊຶ່ງຈະໃຊ້ມາກໍານົດວ່າສິນຄ້າດັ່ງກ່າວມີແຫຼ່ງກໍາເນີດແທ້ ຫຼື ບໍ່. ຂັ້ນຕອນການກວດກາຢ້ອນຫຼັງທັງໝົດ ລວມທັງຂັ້ນຕອນການແຈ້ງໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຫຼື ເຈົ້າໜ້າທີ່ທີ່ມີສິດອໍານາດຂອງປະເທດສະມາຊິກທີ່ສົ່ງອອກ ເຖິງຜົນຂອງການກໍານົດວ່າສິນຄ້າດັ່ງກ່າວນັ້ນມີແຫຼ່ງກໍາເນີດແທ້ ຫຼື ບໍ່ ຊຶ່ງຈະຕ້ອງເຮັດໃຫ້ສໍາເລັດພາຍໃນໜຶ່ງຮ້ອຍແປດສິບ (180) ວັນ. ໃນຂະນະທີ່ກໍາລັງລໍຖ້າຜົນຂອງການກວດກາຢ້ອນຫຼັງ, ຈະຕ້ອງໄດ້ນໍາໃຊ້ວັກ (c).

## ລະບຽບ 19
### ການລົງກວດກາເພື່ອຢັ້ງຢືນ

1. ຖ້າປະເທດສະມາຊິກທີ່ນໍາເຂົ້າບໍ່ພໍໃຈກັບຜົນຂອງການກວດກາຢ້ອນຫຼັງ, ປະເທດດັ່ງກ່າວອາດຈະຮ້ອງຂໍ ການເຂົ້າໄປກວດພິສູດກັບປະເທດສະມາຊິກທີ່ສົ່ງອອກພາຍໃຕ້ກໍລະນີພິເສດ.

2. ກ່ອນການດໍາເນີນການເຂົ້າໄປກວດພິສູດ, ປະເທດສະມາຊິກທີ່ນໍາເຂົ້າ ຈະຕ້ອງສົ່ງແຈ້ງການເປັນລາຍລັກອັກສອນກ່ຽວກັບຈຸດປະສົງຂອງຕົນໃນການການເຂົ້າໄປກວດພິສູດໄປຍັງ:

    (a) ສະຖານທີ່ຂອງຜູ້ສົ່ງອອກ/ຜູ້ຜະລິດຕ້ອງຖືກເຈົ້າໜ້າທີ່ເຂົາໄປກວດກາພິສູດ;

    (b) ເຈົ້າໜ້າທີ່ອອກຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຫຼື ອົງການທີ່ມີສິດອໍານາດອອກຢັ້ງຢືນຂອງປະເທດສະມາຊິກທີ່ຈະເຂົ້າໄປກວດພິສູດໃນດິນແດນຂອງຕົນ;

    (c) ເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງຂອງປະເທດສະມາຊິກທີ່ຈະເຂົ້າໄປກວດພິສູດໃນດິນແດນຂອງຕົນ; ແລະ

(d) ຜູ້ນຳເຂົ້າສິນຄ້າທີ່ເຂົ້າໄປໃນການກວດພິສູດ;

3. ການແຈ້ງການເປັນລາຍລັກອັກສອນທີ່ລະບຸໄວ້ໃນວັກ 2 ຕ້ອງຄົບຖ້ວນເທົ່າທີ່ຈະເປັນໄປໄດ້ລວມທັງສິ່ງຕ່າງໆ ດັ່ງລຸ່ມນີ້:

(a) ຊື່ຂອງເຈົ້າໜ້າທີ່ພາສີ ຫຼື ອົງການທີ່ກ່ຽວຂ້ອງຂອງລັດຖະບານທີ່ອອກແຈ້ງການ;

(b) ຊື່ຂອງຜູ້ສົ່ງອອກ/ຜູ້ຜະລິດທີ່ຕ້ອງໄປກວດກາສະຖານທີ່;

(c) ວັນທີທີ່ສະເໜີເຂົ້າໄປກວດພິສູດ;

(d) ຂອບເຂດຂອງການເຂົ້າໄປກວດພິສູດທີ່ສະ ລວມທັງແຈ້ງ ກ່ຽວກັບ ສິນຄ້າທີ່ຈະເຂົ້າໄປກວດກາຢັ້ງຢືນ; ແລະ

(e) ຊື່ ແລະ ຕຳແໜ່ງຂອງເຈົ້າໜ້າທີ່ປະຕິບັດການກວດພິສູດ.

4. ປະເທດສະມາຊິກທີ່ນຳເຂົ້າຕ້ອງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກຜູ້ສົ່ງອອກ/ຜູ້ຜະລິດທີ່ມີສະຖານທີ່ທີ່ຈະເຂົ້າໄປກວດກາດັ່ງທີ່ກ່າວໄວ້ໃນຂໍ້ 2 ກ່ອນການການເຂົ້າໄປກວດພິສູດທີ່ຖືກສະເໜີ.

5. ເມື່ອບໍ່ໄດ້ຮັບການຍິນຍອມເຫັນດີເປັນລາຍລັກອັກສອນຈາກຜູ້ສົ່ງອອກ/ຜູ້ຜະລິດ ພາຍໃນສາມສິບ (30) ວັນຫຼັງຈາກໄດ້ຮັບແຈ້ງການໂດຍອີງຕາມວັກ 2, ປະເທດສະມາຊິກທີ່ອອກແຈ້ງການ, ອາດຈະປະຕິເສດການປະຕິບັດສິດທິພິເສດຕໍ່ສິນຄ້າທີ່ທີ່ຢາກເຂົ້າໄປກວດພິສູດ.

6. ເຈົ້າໜ້າທີ່ອອກຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ອົງການທີ່ມີສິດອຳນາດໃນການໄດ້ຮັບແຈ້ງການດັ່ງກ່າວອາດຈະເລື່ອນການການເຂົ້າໄປກວດພິສູດທີ່ໄດ້ສະເໜີ ແລະ ແຈ້ງໃຫ້ປະເທດສະມາຊິກທີ່ນຳເຂົ້າຈຸດປະສົງດັ່ງກ່າວ. ເຖິງວ່າຈະມີການເລື່ອນເວລາໃດກໍຕາມ, ການເຂົ້າໄປກວດກາພິສູດຕ້ອງ ດຳເນີນພາຍໃນຫົກສິບ (60) ວັນນັບແຕ່ມື້ໄດ້ຮັບດັ່ງກ່າວ, ຫຼື ເປັນໄລ ຍະເວລາທີ່ຍາວນານກວ່າເກົ່າ ຍ້ອນວ່າປະເທດສະມາຊິກທີ່ກ່ຽວຂ້ອງອາດຈະຕົກລົງເຫັນດີ.

7. ປະເທດສະມາຊິກທີ່ດຳເນີນການກວດສອບຈະໃຫ້ຜູ້ສົ່ງອອກ/ຜູ້ຜະລິດ ທີ່ສິນຄ້າເປັນຫົວຂໍ້ຂອງການກວດກາພິສູດ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫຼື ອົງການທີ່ມີສິດອຳນາດພ້ອມດ້ວຍການກຳນົດເປັນລາຍລັກອັກສອນສິນຄ້າດັ່ງກ່າວສາມາດໄດ້ແຫຼ່ງກຳເນີດ ຫຼື ບໍ່.

8. ການປະຕິບັດໂຈະສິດທິພິເສດ ຕ້ອງປະຕິບັດຕາມການກຳນົດທີ່ເປັນລາຍລັກອັກສອນທີ່ກຳນົດໄວ້ໃນວັກ 7 ວ່າສິນຄ້າດັ່ງກ່າວ ສາມາດໄດ້ຮັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ.

9. ຜູ້ສົ່ງອອກ/ຜູ້ຜະລິດຈະໄດ້ຮັບອະນຸຍາດພາຍໃນສາມສິບ (30) ວັນ, ນັບແຕ່ໄດ້ຮັບຄຳຕັດສິນເປັນລາຍລັກອັກສອນ, ເພື່ອໃຫ້ຂຽນເປັນຄຳເຫັນ ຫຼື ຂໍ້ມູນເພີ່ມຕື່ມ ກ່ຽວກັບການມີສິດໄດ້ຮັບສິນຄ້າ. ຖ້າສິນຄ້າຍັງພົບວ່າບໍ່ແມ່ນແຫຼ່ງກຳເນີດ, ຄຳຕັດສິນເປັນລາຍລັກອັກສອນສຸດທ້າຍຈະຖືກແຈ້ງໃຫ້ເຈົ້າໜ້າທີ່ອອກສິດ ຫຼື ເຈົ້າໜ້າທີ່ທີ່ມີສິດອຳນາດໃນການອອກຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃນສາມສິບ (30) ວັນນັບແຕ່ໄດ້ຮັບຄຳເຫັນ/ຂໍ້ມູນເພີ່ມຕື່ມຈາກຜູ້ສົ່ງອອກ/ຜູ້ຜະລິດ.

10. ຂັ້ນຕອນການເຂົ້າໄປກວດກາເພື່ອຢັ້ງຢືນແຫຼ່ງກຳເນີດສິນຄ້າ, ລວມທັງການເຂົ້າໄປກວດກາຕົວຈິງ ແລະ ການກຳນົດຢ່າງແທ້ຈິງວ່າສິນຄ້າທີ່ມາຈາກ ຫຼື ບໍ່ແມ່ນຕ້ອງຖືກປະຕິບັດ ແລະ ຜົນຂອງຊື່ຈະແຈ້ງໃຫ້ເຈົ້າໜ້າທີ່ອອກຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ອົງການທີ່ມີສິດອຳນາດໃນເວລາສູງສຸດໜຶ່ງຮ້ອຍແປດສິບ (180) ວັນ. ໃນຂະນະທີ່ລໍຖ້າຜົນຂອງການລົງກວດສອບ, ຈະນຳໃຊ້ລະບຽບ 18 (c) ວ່າດ້ວຍການໂຈະການໃຫ້ສິດທິພິເສດທາງດ້ານອັດຕາພາສີ.

## ລະບຽບ 20

### ການຮັກສາຄວາມລັບ

ອີງຕາມກົດໝາຍ ແລະ ລະບຽບການຂອງຕົນ, ບັນດາປະເທດສະມາຊິກຈະຕ້ອງຮັກສາຄວາມລັບຂອງຂໍ້ມູນທຸລະກິດທີ່ຖືກຈັດວ່າເປັນຄວາມລັບທີ່ເກັບກຳໄດ້ໃນຂັ້ນຕອນການກວດພິສູດ ໂດຍອີງຕາມກົດລະບຽບຂໍ້ 18 ແລະ ຂໍ້ 19 ແລະ ຈະປົກປ້ອງຂໍ້ມູນດັ່ງກ່າວຈາກການນຳໄປເຜີຍແຜ່ ທີ່ສາມາດສ້າງຄວາມເສຍຫາຍແກ່ຕຳແໜ່ງທີ່ສາມາດແຂ່ງຂັນໄດ້ ຂອງບຸກຄົນທີ່ສະໜອງຂໍ້ມູນດັ່ງກ່າວ. ຂໍ້ມູນທຸລະກິດທີ່ຖືກຈັດວ່າເປັນຄວາມລັບອາດຈະຖືກເປີດເຜີຍຕໍ່ບັນດາອົງການທີ່ຮັບຜິດຊອບໃນການບໍລິຫານ ແລະ ບັງຄັບໃຊ້ການຕັດສິນກ່ຽວກັບແຫຼ່ງກຳເນີດ ສິນຄ້າ.

## ລະບຽບ 21

### ການປະກອບເອກະສານ ສຳລັບການຈັດຕັ້ງປະຕິບັດ ມາດຕາ 32 (2) (B) (ການຂົນສົ່ງໂດຍກົງ)

ສຳລັບຈຸດປະສົງຂອງການຈັດຕັ້ງປະຕິບັດ ມາດຕາ 32 (2) (ຂ) ຂອງສັນຍາສະບັບນີ້, ເມື່ອການຂົນສົ່ງມີຜົນກະທົບຜ່ານດິນແດນຂອງປະເທດສະມາຊິກໃດໜຶ່ງ ຫຼື ຫຼາຍປະເທດທີ່ບໍ່ແມ່ນສະມາຊິກ, ເອກະສານຕໍ່ໄປນີ້ຈະຖືກສົ່ງໃຫ້ແກ່ອຳນາດການປົກຄອງລັດຖະບານຂອງປະເທດສະມາຊິກທີ່ນຳເຂົ້າ:

(a) ໃບຂົນສົ່ງທີ່ອອກໃນປະເທດສະມາຊິກສົ່ງອອກ;

(b) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ທີ່ອອກໂດຍເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງຂອງປະເທດສະມາຊິກສົ່ງອອກ ຫຼື ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແຫຼ່ງກຳເນີດທີ່ອອກໂດຍ CE ທີ່ຖືກສ້າງຕັ້ງຂຶ້ນໃນປະເທດສະມາຊິກສົ່ງອອກ;

(c) ສຳເນົາໃບແຈ້ງລາຄາຕົ້ນສະບັບ ກ່ຽວກັບ ສິນຄ້າ, ຖ້າເປັນໄປໄດ້; ແລະ

(d) ເອກະສານເພີ່ມຕື່ມຕື່ມເປັນຫຼັກຖານທີ່ປະຕິບັດຕາມຂໍ້ກຳນົດຂອງ ມາດຕາ 32 (2) (b) ວັກ (i), (ii) ແລະ (iii) ຂອງສັນຍາສະບັບນີ້.

## ລະບຽບ 22

### ສິນຄ້າສຳລັບການວາງສະແດງ

1. ສິນຄ້າທີ່ສົ່ງຈາກປະເທດສະມາຊິກສົ່ງອອກ ສຳລັບການວາງສະແດງໃນປະເທດສະມາຊິກອື່ນ ແລະ ຂາຍໃນລະຫວ່າງ ຫຼື ຫຼັງການວາງສະແດງສິນຄ້ານຳເຂົ້າເຂົ້າເປັນປະເທດສະມາຊິກຈະໄດ້ຮັບການອະນຸມັດຕາມສັນຍາສະບັບນີ້ ຕາມເງື່ອນໄຂທີ່ສິນຄ້າຕອບສະໜອງໄດ້ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 3 ຂອງສັນຍາສະບັບນີ້, ຊຶ່ງສະແດງໃຫ້ເຫັນເຖິງຄວາມເພິ່ງພໍໃຈຂອງເຈົ້າໜ້າທີ່ລັດຖະບານ ທີ່ກ່ຽວຂ້ອງຂອງປະເທດສະມາຊິກທີ່ນຳເຂົ້າ ດັ່ງລຸ່ມນີ້:

(a) ຜູ້ສົ່ງອອກໄດ້ສົ່ງສິນຄ້າເຫຼົ່ານັ້ນຈາກດິນແດນ ຂອງປະເທດສະມາຊິກສົ່ງອອກໄປປະເທດສະມາຊິກເມື່ອມີການວາງສະແດງສິນຄ້າ ແລະ ວາງສະແດງສິນຄ້າເຫຼົ່ານັ້ນຢູ່ທີ່ນັ້ນ;

(b) ຜູ້ສົ່ງອອກໄດ້ຂາຍສິນຄ້າ ຫຼື ໂອນໃຫ້ຜູ້ຮັບຈ້າງໃນປະເທດສະມາຊິກທີ່ນຳເຂົ້າ; ແລະ

(c) ສິນຄ້າທີ່ໄດ້ຮັບການຈັດສົ່ງໃນໄລຍະການວາງສະແດງ ຫຼື ຫຼັງຈາກນັ້ນສົ່ງຕໍ່ໄປຍັງປະເທດສະມາຊິກທີ່ນຳເຂົ້າໃນລັດທີ່ຕົນເອງຖືກສົ່ງໄປເຂົ້າຮ່ວມງານວາງສະແດງ.

2. ສຳລັບຈຸດປະສົງໃນການຈັດຕັ້ງປະຕິບັດຂໍ້ 1, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ຫຼື ໃນກໍລະນີຂອງ CE, ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ, ຕ້ອງໃຫ້ອຳນາດການປົກຄອງທີ່ກ່ຽວຂ້ອງຂອງປະເທດສະມາຊິກທີ່ນຳເຂົ້າ. ຊື່ ແລະ ທີ່ຢູ່ຂອງງານວາງສະແດງຕ້ອງຖືກລະບຸ. ເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງຂອງປະເທດສະມາຊິກເມື່ອການວາງສະແດງດັ່ງກ່າວອາດຈະສະໜອງຫຼັກຖານພ້ອມກັບເອກະສານເພີ່ມຕື່ມທີ່ໄດ້ກຳນົດໄວ້ໃນລະບຽບ 21 (d) ສຳລັບການກຳນົດຜະລິດຕະພັນ ແລະ ເງື່ອນໄຂທີ່ຕົນເອງວາງສະແດງສິນຄ້າດັ່ງກ່າວ.

3. ນຳໃຊ້ວັກ 1 ກັບງານວາງສະແດງດ້ານການຄ້າ, ການກະສິກຳ ຫຼື ຫັດຖະກຳ, ງານເທດສະການ ຫຼື ການສະແດງໃນທຳນອງດຽວກັນນັ້ນ ຫຼື ການສະແດງຢູ່ໃນຮ້ານຄ້າ ຫຼື ສະຖານທີ່ດຳເນີນທຸລະກິດຕ່າງໆ ເພື່ອແນໃສ່ຂາຍສິນຄ້າຕ່າງປະເທດ ແລະ ເມື່ອສິນຄ້າຍັງຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີໃນລະຫວ່າງການວາງສະແດງ.

## ລະບຽບ 23

### ໃບແຈ້ງລາຄາອອກໂດຍປະເທດທີສາມ

1. ເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງໃນປະເທດສະມາຊິກ ທີ່ນຳເຂົ້າຕ້ອງຍອມຮັບຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃນກໍລະນີທີ່ໃບແຈ້ງລາຄາການຂາຍອອກ ໂດຍບໍລິສັດທີ່ຕັ້ງຢູ່ໃນປະເທດທີສາມ ຫຼື ໂດຍຜູ້ສົ່ງອອກໃນອາຊຽນ ສຳລັບບັນຊີຂອງບໍລິສັດທີ່ດັ່ງກ່າວ, ສະໜອງສິນຄ້າຕອບສະໜອງຂໍ້ກຳນົດຂອງ ໝວດ 3 ຂອງສັນຍາສະບັບນີ້.

2. ຜູ້ສົ່ງອອກຕ້ອງລະບຸ "ໃບແຈ້ງລາຄາອອກໂດຍປະເທດທີສາມ" ແລະ ຂໍ້ມູນເຊັ່ນ: ຊື່ ແລະ ປະເທດຂອງບໍລິສັດທີ່ອອກໃບເກັບເງິນໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D).

3. ໃນກໍລະນີທີ່ໃບເກັບເງິນການຂາຍອອກໂດຍບໍລິສັດທີ່ຕັ້ງຢູ່ໃນປະເທດທີສາມ ຫຼື ໂດຍຜູ້ສົ່ງອອກອາຊຽນ ສຳລັບບັນຊີຂອງບໍລິສັດດັ່ງກ່າວ, CE ສາມາດອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ກ່ຽວກັບ ໃບແຈ້ງລາຄາ, ໃບສັ່ງຊື້ ຫຼື ໃບຫຸ້ມຫໍ່ສິນຄ້າ.

## ລະບຽບ 24

### ການດຳເນີນການຕໍ່ການ ປອມແປງເອກະສານ

1. ເມື່ອສົງໄສວ່າມີການ ປອມແປງເອກະສານ ທີ່ກ່ຽວຂ້ອງກັບການພິສູດແຫຼ່ງກຳເນີດສິນຄ້າ ເກີດຂຶ້ນ,ອຳນາດການປົກຄອງທີ່ກ່ຽວຂ້ອງຕ້ອງຮ່ວມມືກັນໃນການດຳເນີນການ ທີ່ຈະດຳເນີນຢູ່ໃນປະເທດສະມາຊິກທີ່ກ່ຽວຂ້ອງຕໍ່ບຸກຄົນທີ່ກ່ຽວຂ້ອງ.

2. ແຕ່ລະປະເທດສະມາຊິກຕ້ອງດຳເນີນການລົງໂທດທາງກົດໝາຍ ສຳລັບການກະທຳປອມແປງທີ່ກ່ຽວຂ້ອງກັບຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ.

## ລະບຽບ 25

### ລາຄາ FOB

ສຳລັບຈຸດປະສົງຂອງຂໍ້ຕົກລົງສະບັບນີ້, ເຖິງແມ່ນວ່າຈະມີກົດລະບຽບຂໍ້ 11(b), ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງຈະສະແດງສະເພາະລາຄາ FOB ເທົ່ານັ້ນ, ຕາມທີ່ປະເທດສະມາຊິກໄດ້ກຳນົດໄວ້ໃນວັກທີ່ກ່ຽວຂ້ອງກັບລາຄາ FOB ທີ່ໝາຍເຫດຢູ່ດ້ານຫຼັງຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D), ໃນກໍລະນີທີ່ການໃຊ້ການສະສົມມູນຄ່າພາຍໃນພາກພື້ນຖືກຄິດໄລ່ ໂດຍການນຳໃຊ້ສູດທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງຂໍ້ຕົກລົງສະບັບນີ້ໄດ້ຖືກນຳໃຊ້ໃນການກຳນົດແຫຼ່ງກຳເນີດ.

## ລະບຽບ 26

### ຄວາມເທົ່າທຽມກັນຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເອະສານ ແລະ ໃບຢັ້ງຢືນແບບອີເລັກໂຕຣນິກ (ແບບພິມ D ແບບອີເລັກໂຕຣນິກ)

1. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ແບບພິມ D) ໃນຮູບແບບອີເລັກໂຕຣນິກອາດຈະຖືກນຳໃຊ້, ອອກ ແລະ ຍອມຮັບແທນໜຶ່ງໃນຮູບແບບເອກະສານ, ມີຜົນສັກສິດທາງກົດໝາຍເທົ່າທຽມກັນ.

2. ລະບຽບ 27 ເຖິງ 31 ຕ້ອງນຳໃຊ້ກັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D). ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນໃນລະບຽບ 27 ເຖິງ 31, ລະບຽບ 1 ເຖິງ 6, 8, 10, 11, 14 ເຖິງ 16, ແລະ 18 ເຖິງ 25 ຍັງຕ້ອງໃຊ້ກັບການປຸງແຕ່ງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D).

## ລະບຽບ 27

### ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (E-FORM D)

1. ເພື່ອຮັບປະກັນຄວາມສາມາດໃນການຈັດຕັ້ງປະຕິບັດ, ບັນດາປະເທດສະມາຊິກຈະແລກປ່ຽນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ໂດຍສອດຄ່ອງກັບຄຳແນະນຳ ກ່ຽວກັບ ການກຳນົດຂັ້ນຕອນການປະຕິບັດ ແລະ ຂໍ້ແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດຂອງ ATIGA e- Form D, ຊຶ່ງອາດຈະມີການປັບປຸງເປັນແຕ່ລະໄລຍະ.

2. ໃນກໍລະນີທີ່ປະເທດສະມາຊິກບໍ່ຕ້ອງການຈັດຕັ້ງປະຕິບັດ ທຸກຂັ້ນຕອນທາງອີເລັກໂຕຣນິກ ແລະ ອົງປະກອບຂໍ້ມູນທີ່ກ່ຽວຂ້ອງທີ່ລະບຸໄວ້ໃນເອກະສານແນະນຳ ຂອງ ATIGA e- Form D, ປະເທດສະມາຊິກນັ້ນຕ້ອງແຈ້ງໃຫ້ປະເທດສະມາຊິກອື່ນໆ ຜ່ານກອງເລຂາອາຊຽນຊາບເຖິງຂັ້ນຕອນ ແລະ ອົງປະກອບຂອງຂໍ້ມູນທີ່ກ່ຽວຂ້ອງທີ່ຕົນປະສົງທີ່ຈະຈັດຕັ້ງປະຕິບັດ.

## ລະບຽບ 28

### ການກວດກາຄຳຮ້ອງຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (E-FORM D)

ແທນທີ່ລະບຽບ 6 (ກ), ຄຳຮ້ອງຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ຈະຖືກຍອມຮັບ, ກວດພິສູດວ່າຄົບຖ້ວນ ແລະ ຖືກຕ້ອງທາງອີເລັກໂຕຣນິກ.

## ລະບຽບ 29

### ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (E-FORM D)

1. ໃນກໍລະນີຍົກເວັ້ນ, ຜູ້ສົ່ງອອກສາມາດນຳໃຊ້ກັບເຈົ້າໜ້າທີ່ອອກ, ໂດຍອີງຕາມຂັ້ນຕອນຂອງເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D), ພາຍໃນໜຶ່ງ (1) ປີ ນັບແຕ່ວັນທີ່ອອກ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ເປັນຕົ້ນໄປ.

2. ນອກເໜືອຈາກຂັ້ນຕອນທາງອີເລັກໂຕຣນິກ ທີ່ລະບຸໄວ້ໃນເອກະສານແນະນຳກ່ຽວກັບ ການປະຕິບັດ ແລະ ຂໍ້ແນະນຳ ກ່ຽວກັບ ການປະຕິບັດຂໍ້ຄວາມ ATIGA e-Form D, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ອາດຈະຖືກສົ່ງຕໍ່ໂດຍກົງໄປຍັງຜູ້ສົ່ງອອກ ຜ່ານການບໍລິການປະຕູດຽວແຫ່ງຊາດ (NSW) ຂອງປະເທດສະມາຊິກທີ່ອອກ ແລະ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ອາດຈະຖືກສົ່ງຕໍ່ໂດຍກົງໄປຍັງຜູ້ນຳເຂົ້າ ໂດຍຜູ້ສົ່ງອອກ ຫຼື ໂດຍ NSW ຂອງປະເທດສະມາຊິກທີ່ນຳເຂົ້າ.

3. ໃນກໍລະນີທີ່ມີຂໍ້ຍົກເວັ້ນ ເຊັ່ນວ່າ, ແຕ່ບໍ່ຈຳກັດພຽງແຕ່ ຄວາມລົ້ມແຫຼວທາງດ້ານເຕັກນິກທີ່ເຮັດໃຫ້ມີການສູນເສຍຂໍ້ມູນ, ປະເທດສະມາຊິກທີ່ໄດ້ຮັບອາດຈະຮ້ອງຂໍໃຫ້ສົ່ງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ຈາກປະເທດສະມາຊິກທີ່ສົ່ງອອກ.

4. ການປ່ຽນແປງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ຕ້ອງເຮັດໂດຍການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D), ແລະ ໃບຢັ້ງຢືນແຫຼ່ງກຳເນີດອີເລັກໂຕຣນິກກ່ອນໜ້ານີ້ (e-Form D) ຈະຖືກຍົກເລີກ ໂດຍສອດຄ່ອງກັບຂະບວນການທີ່ລະບຸໄວ້ໃນເອກະສານແນະນຳກ່ຽວກັບ ການປະຕິບັດ ແລະ ການນຳໃຊ້ຂໍ້ຄວາມຂອງ ATIGA e-Form D.

## ລະບຽບ 30

## ການຍື່ນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (E-FORM D)

1. ສໍາລັບຈຸດປະສົງໃນການຮຽກຮ້ອງສິດທິພິເສດທາງດ້ານພາສີ, ຜູ້ນໍາເຂົ້າຕ້ອງຍື່ນຕໍ່ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນໍາເຂົ້າໃນເວລານໍາເຂົ້າ, ໃບແຈ້ງການນໍາເຂົ້າທີ່ມີຂໍ້ມູນກ່ຽວກັບ ເລກທີເອກະສານຢັ້ງຢືນອີເລັກໂຕຣນິກ (e-Form D), ເອກະສານເພີ່ມຕື່ມ (ຕົວຢ່າງ: ໃບແຈ້ງລາຄາ ແລະ ຖ້າຕ້ອງການ, ໃບຂົນສົ່ງທີ່ອອກໃນເຂດແດນຂອງປະເທດສະມາຊິກສົ່ງອອກ) ແລະ ເອກະສານອື່ນໆຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການຂອງປະເທດສະມາຊິກທີ່ນໍາເຂົ້າ.

2. ເຈົ້າໜ້າທີ່ພາສີໃນປະເທດສະມາຊິກທີ່ນໍາເຂົ້າ ອາດຈະມີການການຕອບຄືນພາສີແບບອີເລັກໂຕຣນິກ ໂດຍລະບຸສະຖານະການນໍາໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ຕາມບົດແນະນໍາການຈັດຕັ້ງປະຕິບັດຂໍ້ຄວາມ ສໍາລັບການຕອບຄືນດ້ານພາ ສີຕາມທີ່ກໍານົດໄວ້. ຄໍາແນະນໍາ ກ່ຽວກັບການກໍານົດຂະບວນການ ແລະ ຂໍ້ແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດໜັງສືຮັບຮອງ e-Form D. ຖ້າໄດ້ຮັບການອະນຸຍາດ, ສະຖານະການນໍາໃຊ້ຈະຖືກສົ່ງໃນຮູບແບບອີເລັກໂຕຣນິກໂດຍຜ່ານ ການບໍລິການປະຕູດຽວຂອງອາຊຽນ (ASW) ໄປໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ທັນທີຫຼັງຈາກການນໍາເຂົ້າ ຫຼື ເມື່ອໄດ້ເຮັດຂຶ້ນພາຍໃນໄລຍະເວລາທີ່ໃຊ້ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ທີ່ຍັງມີຜົນບັງຄັບໃຊ້.

3. ໃນກໍລະນີເມື່ອໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ຖືກປະຕິເສດໂດຍເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນໍາເຂົ້າ, ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນໍາເຂົ້າຕ້ອງ:

   (a) ຮ່າງເອກະສານຕອບຄືນ ກ່ຽວກັບ ພາສີແບບອີເລັກໂຕຣນິກ ທີ່ສະແດງສະຖານະການປະຕິເສດດ້ວຍເຫດຜົນຂອງການປະຕິເສດ, ລວມທັງເຫດຜົນສໍາລັບການປະຕິເສດຄວາມຕ້ອງການຂອງພາສີ, ໂດຍອີງຕາມເອກະສານແນະນໍາກ່ຽວກັບ ຂັ້ນຕອນການດໍາເນີນງານຂອງ ATIGA e-Form D ການຕອບຄືນພາສີທາງອີເລັກໂຕຣນິກ, ຖ້າມີການຮ່າງເອກະສານ, ຄໍາຕອບຈະຖືກສົ່ງຜ່ານທາງອີເລັກໂຕຣນິກໂດຍຜ່ານ ASW ໄປໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກໍາ

ເນີດສິນຄ້າໃນປະເທດສະມາຊິກທີ່ສົ່ງອອກ ພາຍໃນໄລຍະເວລາທີ່ເໝາະສົມບໍ່ໃຫ້ເກີນຫົກສິບ (60) ວັນ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າອີເລັກໂຕຣນິກ (e-Form); ຫຼື

(b) ໃນກໍລະນີທີ່ບໍ່ສາມາດນຳໃຊ້ຂັ້ນຕອນໃນວັກ 3(a) ໄດ້, ເຈົ້າໜ້າທີ່ພາສີຂອງປະເທດສະມາຊິກທີ່ນຳເຂົ້າອາດຈະແຈ້ງໃຫ້ເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງປະເທດສະມາຊິກທີ່ສົ່ງອອກເປັນລາຍລັກອັກສອນຊາບກ່ຽວກັບ ສາເຫດຂອງການປະຕິເສດການໃຫ້ສິດທິພິເສດທາງດ້ານອັດຕາພາສີ ພ້ອມດ້ວຍໝາຍເລກອ້າງອີງຂອງ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form), ພາຍໃນໄລຍະເວລາເໝາະສົມ ບໍ່ໃຫ້ເກີນຫົກສິບ (60) ວັນ.

4. ໃນກໍລະນີທີ່ບໍ່ໄດ້ຮັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (ແບບພິມ D ແບບອີເລັກໂຕຣນິກ), ດັ່ງທີ່ໄດ້ກ່າວໄວ້ໃນວັກກ່ອນໜ້ານີ້, ປະເທດສະມາຊິກທີ່ນຳເຂົ້າຄວນຍອມຮັບ ແລະ ພິຈາລະນາການຊີ້ແຈງຈາກເຈົ້າໜ້າທີ່ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ປະເມີນອີກຄັ້ງວ່າ ຈະສາມາດຍອມຮັບ ແບບພິມ ແບບອີເລັກໂຕຣນິກວ່າໄດ້ ຫຼື ບໍ່ ສຳລັບການໃຫ້ປະຕິບັດສິດທິພິເສດທາງດ້ານອັດຕາພາສີ. ການຊີ້ແຈງດັ່ງກ່າວຄວນໃຫ້ການແກ້ໄຂສາເຫດຂອງການປະຕິເສດ ການໄດ້ຮັບສິດທິພິເສດທາງດ້ານອັດຕາພາສີທີ່ປະເທດສະມາຊິກທີ່ນຳເຂົ້າໄດ້ຍົກຂຶ້ນມາໃຫ້ລະອຽດ ແລະ ຄົບຖ້ວນ.

## ລະບຽບ 31

### ການນຳໃຊ້ລະບົບອີເລັກໂຕຣນິກ ແລະ ການເກັບຮັກສາຂໍ້ມູນ

1. ສຳລັບຈຸດປະສົງຂອງຂັ້ນຕອນການຢັ້ງຢືນໂດຍອີງຕາມລະບຽບ 18 ແລະ 19, ຜູ້ຜະລິດ ແລະ/ຫຼື ຜູ້ສົ່ງອອກທີ່ຍື່ນໃບສະເໜີຂໍອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກແຫຼ່ງກຳເນີດ (e-Form D) ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຂອງສະມາຊິກສົ່ງອອກ. ສະໜອງການເກັບຮັກສາບັນທຶກຂໍ້ມູນເພື່ອ ສະໜັບສະໜູນສຳລັບການຍື່ນໃບສະເໜີສຳລັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ບໍ່ເກີນສາມ (3) ປີ ນັບແຕ່ມື້ອອກໃບຢັ້ງຢືນອີເລັກໂຕຣນິກແຫຼ່ງກຳເນີດ (e-Form D) ເປັນຕົ້ນໄປ.

2. ການຍື່ນຄໍາຮ້ອງຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ແລະ ເອກະສານທັງໝົດທີ່ກ່ຽວຂ້ອງກັບໃບສະເໜີດັ່ງກ່າວ ຕ້ອງຖືກຮັກສາໄວ້ໂດຍເຈົ້າໜ້າທີ່ອອກຢັ້ງຢືນໃໝ່ບໍ່ໃຫ້ເກີນສາມ (3) ປີ ນັບແຕ່ມື້ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ເປັນຕົ້ນໄປ.

3. ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບຄວາມຖືກຕ້ອງຂອງໃບຢັ້ງຢືນແບບອີເລັກໂຕຣນິກຕົ້ນສະບັບ (e-Form D) ຈະຕ້ອງໄດ້ຮັບການສະໜອງໃຫ້ຕາມການຮ້ອງຂໍຂອງປະເທດສະມາຊິກທີ່ນໍາເຂົ້າ, ໂດຍເຈົ້າໜ້າທີ່ທີ່ໄດ້ຮັບອະນຸຍາດຈາກອົງການອອກຢັ້ງຢືນແຫຼ່ງກໍາເນີດສິນຄ້າ.

4. ຂໍ້ມູນໃດທີ່ໃຊ້ໃນການສື່ສານລະຫວ່າງປະເທດສະມາຊິກທີ່ກ່ຽວຂ້ອງ ຈະຖືກເກັບຮັກສາເປັນ ຄວາມລັບ ແລະ ຈະຖືກນໍາໃຊ້ເພື່ອຈຸດປະສົງຂອງໃບຢັ້ງຢືນ ແຫຼ່ງກໍາເນີດສິນຄ້າແບບອີເລັກໂຕຣນິກ (e-Form D) ເທົ່ານັ້ນ.

ເອກະສານຊ້ອນທ້າຍ 2

## ຮູບແບບໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າທີ່ແນະນຳ

ຮູບແບບນີ້ນຳໃຊ້ເປັນຄູ່ມືແນະນຳ ແລະ ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ແມ່ນສາມາດທີ່ຈະນຳໃຊ້ຮູບແບບອື່ນໄດ້ ໂດຍໃຫ້ມີຂໍ້ມູນທີ່ຕ້ອງການ.

| ຊື່ຜະລິດຕະພັນ | ລະຫັດ HS ລະດັບຫົກຕົວເລກ ຫຼື ລະຫັດ AHTN | ມາດຖານໃນການໄດ້ຮັບແຫຼ່ງກຳເນີດສິນຄ້າ | ມູນຄ່າຂອງລາຄາ FOB ເມື່ອນຳໃຊ້ມາດຖານໃນການໄດ້ຮັບແຫຼ່ງກຳເນີດສິນຄ້າ ໃນການໃຊ້ການສະສົມມູນຄ່າພາຍໃນພາກພື້ນ | ປະລິມານສິນຄ້າ | ເຄື່ອງໝາຍການຄ້າ, ຖ້າມີ |
|---|---|---|---|---|---|
| | | | | | |

ຜູ້ສົ່ງອອກຜະລິດຕະພັນທີ່ເອກະສານນີ້ກວມເອົາ (ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕາມລະຫັດການອະນຸຍາດ: 0000/XXXX) ປະກາດຮັບຮອງວ່າ ຜະລິດຕະພັນດັ່ງກ່າວບັນລຸໄດ້ຕາມລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າ ຊຶ່ງຖືວ່າເປັນສິນຄ້າແຫຼ່ງກຳເນີດພາຍໃຕ້ ATIGA (ປະເທດທີ່ເປັນແຫຼ່ງກຳເນີດສິນຄ້າຂອງອາຊຽນ: .........) ເວັ້ນເສຍແຕ່ວ່າທີ່ໄດ້ກຳນົດໄວ້ເປັນຢ່າງອື່ນຢ່າງຈະແຈ້ງແລ້ວເທົ່ານັ້ນ.

**ລາຍເຊັນຂອງຜູ້ທີ່ມີສິດອຳນາດລົງລາຍເຊັນໃສ່ຊື່ຄົນເຊັນທີ່ພິມ/ທີ່ຈ້ຳກາຊື່**
**ຊື່ຜູ້ລົງລາຍເຊັນ**

## ຄຳອະທິບາຍເພີ່ມຕື່ມ:

1. ເພື່ອຈຸດປະສົງຂອງມາດຖານໃນການໄດ້ຮັບແຫຼ່ງກຳເນີດສິນຄ້າ

| | | |
|---|---|---|
| (a) | ສິນຄ້າທີ່ໄດ້ຮັບ ຫຼື ຜະລິດອອກທັງໝົດໃນປະເທດສະມາຊິກທີ່ສົ່ງອອກ ທີ່ບັນລຸໄດ້ຕາມມາດຕາ 27 (Wholly Obtain) ຂອງ ATGA | "WO (Wholly Obtain)" |
| (b) | ຜະລິດຕະພັນ ທີ່ບັນລຸໄດ້ຕາມມາດຕາ 28 (Non Wholly Obtain) ຂອງ ATGA<br>• ການໃຊ້ຫຼັກການສະສົມມູນຄ່າພາຍໃນພາກພື້ນ<br>• ການປ່ຽນແປງລັດຫັດອັດຕາພາສີ<br>• ຂັ້ນຕອນສະເພາະ<br>• ມາດຖານແບບປະສົມປະສົມປະສານ | ເປີເຊັນຂອງ ການໃຊ້ການສະສົມມູນຄ່າພາຍໃນພາກພື້ນ, ຍົກຕົວຢ່າງ: "40%"<br>ກົດລະບຽບ CTC ຕົວຈິງ, ຕົວຢ່າງ: "CC" ຫຼື "CTH" ຫຼື "CTSH"<br>"SP (ຂັ້ນຕອນສະເພາະ)"<br>ມາດຖານປະສົມຕົວຈິງ, ຕົວຢ່າງ: "CTSH+35%" |
| (c) | ສິນຄ້າ ທີ່ບັນລຸໄດ້ຕາມວັກທີ 2 ຂອງມາດຕາ 30 (ການສະສົມບາງສ່ວນ) ຂອງ ATIGA | "PC x%", ຊຶ່ງ x ແມ່ນຈຳນວນເປີເຊັນຂອງ ການໃຊ້ການສະສົມມູນຄ່າພາຍໃນພາກພື້ນ ທີ່ຕ່ຳກວ່າ 40%, ຕົວຢ່າງ: "PC 25%" |

2. ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ສາມາດທີ່ຈະເພີ່ມຂໍ້ມູນເພີ່ມຕື່ມໃສ່ ຖ້າເຫັນວ່າມີຄວາມຈຳເປັນ.

## ຮູບແບບໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າແບບຕໍ່ເນື່ອງທີ່ແນະນຳ

ຮູບແບບນີ້ນຳໃຊ້ເປັນຄູ່ມືແນະນຳ ແລະ ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ແມ່ນສາມາດທີ່ທີ່ຈະນຳໃຊ້ຮູບແບບອື່ນໄດ້ ໂດຍໃຫ້ມີຂໍ້ມູນທີ່ຕ້ອງການ.

| ຊື່ຜະລິດຕະພັນ | ລະຫັດ HS ລະດັບ ຫົກຕົວເລກ ຫຼື ລະຫັດ AHTN | ມາດຖານໃນການໄດ້ຮັບແຫຼ່ງກຳເນີດສິນຄ້າ | ປະເທດທີ່ເປັນແຫຼ່ງກຳເນີດສິນຄ້າຂອງປະເທດທີ່ສົ່ງອອກທຳອິດ | ມູນຄ່າຂອງລາຄາ FOB ເມື່ອນຳໃຊ້ມາດຖານໃນການໄດ້ຮັບແຫຼ່ງກຳເນີດສິນຄ້າ ໃນການໃຊ້ການສະສົມມູນຄ່າພາຍໃນພາກພື້ນ | ປະລິມານສິນຄ້າ | ເຄື່ອງໝາຍການຄ້າ, ຖ້າມີ | ໝາຍເລກອ້າງອີງຂອງຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບຕົ້ນ | ວັນທີອອກຫຼັກຖານຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບຕົ້ນ | ລະຫັດການອະນຸຍາດຂອງ ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງປະເທດທີ່ສົ່ງອອກທຳອິດ, ຖ້າມີ |
|---|---|---|---|---|---|---|---|---|---|
| | | | | | | | | | |

ຜູ້ສົ່ງອອກຜະລິດຕະພັນທີ່ເອກະສານນີ້ກວມເອົາ (ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕາມລະຫັດການອະນຸຍາດ: 0000/XXXX) ປະກາດຮັບຮອງວ່າ ຜະລິດຕະພັນດັ່ງກ່າວບັນລຸໄດ້ຕາມລະບຽບກ່ຽວກັບແຫຼ່ງກຳເນີດສິນຄ້າ ຊຶ່ງຖືວ່າເປັນສິນຄ້າແຫຼ່ງກຳເນີດ ພາຍໃຕ້ ATIGA (ປະເທດທີ່ເປັນແຫຼ່ງກຳເນີດສິນຄ້າຂອງອາຊຽນ: .........) ເວັ້ນເສຍແຕ່ວ່າທີ່ໄດ້ກຳນົດໄວ້ເປັນຢ່າງອື່ນຢ່າງຈະແຈ້ງແລ້ວເທົ່ານັ້ນ.

**ລາຍເຊັນຂອງຜູ້ທີ່ມີສິດອຳນາດລົງລາຍເຊັນໃສ່ຊື່ຄົນເຊັນທີ່ພິມ/ທີ່ຈ້ຳກາຊື່**
**ຊື່ຜູ້ລົງລາຍເຊັນ**

## ຄຳອະທິບາຍເພີ່ມຕື່ມ:

1. ເພື່ອຈຸດປະສົງຂອງມາດຖານໃນການໄດ້ຮັບແຫຼ່ງກຳເນີດສິນຄ້າ

| | | |
|---|---|---|
| (d) | ສິນຄ້າທີ່ໄດ້ຮັບ ຫຼື ຜະລິດອອກທັງໝົດໃນປະເທດສະມາຊິກທີ່ສົ່ງອອກ ທີ່ບັນລຸໄດ້ຕາມມາດຕາ 27 (Wholly Obtain) ຂອງ | "WO" |
| (e) | ຜະລິດຕະພັນ ທີ່ບັນລຸໄດ້ຕາມມາດຕາ 28 (Non Wholly Obtain) ຂອງ ATGA<br>• ການໃຊ້ຫຼັກການສະສົມມູນຄ່າພາຍໃນພາກພື້ນ<br>• ການປ່ຽນແປງລັດຫັດອັດຕາພາສີ<br>• ຂັ້ນຕອນສະເພາະ<br>• ມາດຖານແບບປະສົມປະສົມປະສານ | ເປີເຊັນຂອງ ການໃຊ້ການສະສົມມູນຄ່າພາຍໃນພາກພື້ນ, ຍົກຕົວຢ່າງ: "40%"<br>ກົດລະບຽບ CTC ຕົວຈິງ, ຕົວຢ່າງ: "CC" ຫຼື "CTH" ຫຼື "CTSH"<br>"SP (ຂັ້ນຕອນສະເພາະ)"<br>ມາດຖານປະສົມຕົວຈິງ, ຕົວຢ່າງ: "CTSH+35%" |
| (f) | ສິນຄ້າ ທີ່ບັນລຸໄດ້ຕາມວັກທີ 2 ຂອງມາດຕາ 30 (ການສະສົມບາງສ່ວນ) ຂອງ ATIGA | "PC x%", ຊຶ່ງ x ແມ່ນຈຳນວນເປີເຊັນຂອງ ການໃຊ້ການສະສົມມູນຄ່າພາຍໃນພາກພື້ນ ທີ່ຕ່ຳກວ່າ 40%, ຕົວຢ່າງ: "PC 25%" |

2. ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ສາມາດທີ່ຈະເພີ່ມຂໍ້ມູນເພີ່ມຕື່ມຕື່ມໃສ່ ຖ້າເຫັນວ່າມີຄວາມຈຳເປັນ.